ເພື່ອຈັດຕັ້ງຜັນຂະຫຍາຍ ເນື້ອໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ກ່ຽວກັບການເພີ່ມທະວີການນຳພາຂອງພັກ, ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ປະຕິບັດຕາມມະຕິຕົກລົງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ ລົງວັນທີ 15/2/2016 ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ.

ເພື່ອໃຫ້ສອດຄ່ອງກັບມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກ, ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າຮຽບຮຽງ ເອກະສານອົບຮົມສະມາຊິກພັກໃໝ່ ເອກະສານປະກອບ ມີ 5 ບົດ ໂດຍຈັດພິມເປັນປຶ້ມ.

ເນື້ອໃນເອກະສານດັ່ງກ່າວ ເປັນບ່ອນອີງ ແລະ ເປັນຄູ່ມືໃຫ້ແກ່ຄະນະພັກ ແລະ ຄະນະໂຄສະນາອົບຮົມຂັ້ນຕ່າງໆ ເພື່ອນຳໄປສຶກສາອົບຮົມພະນັກງານ, ສະມາຊິກພັກໃຫ້ຮັບຮູ້-ເຂົ້າໃຈ ແລະ ກຳແໜ້ນຄວາມຮູ້ພື້ນຖານ ກ່ຽວກັບລັດທິມາກ-ເລນິນ, ວຽກງານກໍ່ສ້າງ ແລະ ປັງປຸງພັກ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງສະມາຊິກພັກ, ເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ, ເດັດດ່ຽວຕ້ານພະຍາດອາດຍາສິດ, ການສໍ້ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງພັກ-ລັດ ກໍຄື ຖັນແຖວສະມາຊິກພັກ, ພະນັກງານຢ່າງທັນການ ບົນພື້ນຖານຂອງຄວາມຮັບຮູ້ ແລະ ເຂົ້າໃຈດັ່ງກ່າວ ເພື່ອຊ່ວຍໃຫ້ພະນັກງານ, ສະມາຊິກພັກມີຄວາມຕັ້ງໜ້າໃນການຝຶກຝົນ

ຫຼໍ່ຫຼອມຕົນເອງໃຫ້ກາຍເປັນສະມາຊິກພັກທີ່ປອດໃສເຂັ້ມແຂງ ແລະ ໜັກແໜ້ນ.

ການປັບປຸງ, ຮຽບຮຽງ ແລະ ການຈັດພິມເອກະສານໃນຄັ້ງນີ້ ບໍ່ອາດຈະຫຼີກລ້ຽງຈາກຂໍ້ຂາດຕົກບົກຜ່ອງ, ຫວັງຢ່າງຍິ່ງວ່າຈະໄດ້ຮັບການປະກອບຄໍາເຫັນຈາກບັນດາທ່ານຜູ້ອ່ານ, ຜູ້ຄົ້ນຄວ້າຮໍ່າຮຽນ ເພື່ອພວກເຮົາຈະໄດ້ປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າໃນຄັ້ງຕໍ່ໄປ.

**ຄະນະໂຄສະນາອົບຮົມສູນກາງພັກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ                    ເລກທີ 14/ຄອສພ.

ນະຄອນຫຼວງວຽງຈັນ, ວັນທີ 3/10/2017

# ຄຳແນະນຳ
# ຂອງຄະນະໂຄສະນາອົບຮົມສູນກາງພັກ
# ກ່ຽວກັບການນຳໃຊ້ເອກະສານອົບຮົມສະມາຊິກພັກໃໝ່

**ເຖິງ:** ຄະນະພັກບັນດາກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງວຽງຈັນ, ຄະນະພັກແຂວງ ແລະ ຄະນະໂຄສະນາອົບຮົມແຂວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການນຳໃຊ້ເອກະສານ ແລະ ຈັດຕັ້ງຝຶກອົບຮົມສະມາຊິກພັກໃໝ່.

- ອີງຕາມມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ແລະ ອີງຕາມກົດລະບຽບພັກສະໄໝທີ X.

- ອີງຕາມມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 15/2/2016 ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ຄະນະໂຄສະນາອົບຮົມສູນກາງພັກໄດ້ຄົ້ນຄວ້າຮຽບຮຽງເອກະສານອົບຮົມສະມາຊິກພັກໃໝ່ ໃຫ້ສອດຄ່ອງກັບເນື້ອໃນມະຕິກອງປະຊຸມໃຫຍ່ຂອງພັກ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະໂຄສະນາອົບຮົມສູນກາງພັກ ແນະນຳບາງບັນຫາດັ່ງນີ້:

## I. ຈຸດປະສົງລະດັບຄາດໝາຍ:

- ແນໃສ່ຍົກລະດັບຄວາມຮັບຮູ້-ເຂົ້າໃຈກ່ຽວກັບມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວຢ່າງເລິກເຊິ່ງ, ໂດຍສະເພາະ ແມ່ນຄວາມຮູ້ກ່ຽວກັບລັດທິມາກ-ເລນິນ, ວຽກງານກໍ່ສ້າງ ແລະ ປັບປຸງພັກ, ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ ແລະການແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຂອງພະນັກງານ, ສະມາຊິກພັກປະຊາຊົນປະຕິວັດລາວ.

- ເພື່ອສຶກສາອົບຮົມສະມາຊິກພັກ (ໂດຍສະເພາະແມ່ນສະມາຊິກພັກໃໝ່) ໄດ້ມີຄວາມຮັບຮູ້-ເຂົ້າໃຈຢ່າງເລິກເຊິ່ງ ແລະ ກຳ

ແໜ້ນທິດນຳໃນການກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

ບົນພື້ນຖານຄວາມຮັບຮູ້-ເຂົ້າໃຈດັ່ງກ່າວ ເຮັດໃຫ້ການຈັດຕັ້ງຂອງພັກມີຄວາມໜັກແໜ້ນເຂັ້ມແຂງສືບຕໍ່ເຮັດໜ້າທີ່ການເມືອງເປັນຢ່າງດີ.

**II. ເປົ້າໝາຍສຶກສາອົບຮົມ:**

ສະມາຊິກພັກຢູ່ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ກຸ່ມບ້ານ, ບໍລິສັດ, ໂຮງຈັກ, ໂຮງງານ ແລະ ກົມກອງການຜະລິດ.

**III. ເນື້ອໃນ ແລະ ວິທີການຈັດຕັ້ງປະຕິບັດ:**

**1. ເນື້ອໃນ:**

ເນື້ອໃນສຳລັບອົບຮົມສະມາຊິກພັກໃໝ່ ມີດັ່ງນີ້:

**ບົດທີ 1**: ຄວາມຮູ້ພື້ນຖານກ່ຽວກັບລັດທິມາກ-ເລນິນ.

**ບົດທີ 2** ວຽກງານກໍ່ສ້າງ ແລະ ປັບປຸງພັກ.

**ບົດທີ 3**: ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງສະມາຊິກພັກ.

**ບົດທີ 4**: ເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ.

**ບົດທີ 5:** ແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

**2. ວິທີການຈັດຕັ້ງປະຕິບັດ:**

ມອບໃຫ້ຄະນະພັກກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ, ຄະນະພັກນະຄອນຫຼວງ,

ຄະນະພັກແຂວງ, ຄະນະໂຄສະນາອົບຮົມແຂວງ ແລະ ຄະນະພັກຮາກຖານແຕ່ລະບ່ອນ ເອົາເອກະສານນີ້ເປັນເອກະສານສຶກສາອົບຮົມພະນັກງານ, ສະມາຊິກພັກໃໝ່ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

- ເພື່ອເຮັດໃຫ້ການຈັດຕັ້ງຮໍ່າຮຽນເອກະສານນີ້ໃຫ້ໄດ້ຮັບຜົນດີ.

- ກໍານົດເວລາຮໍ່າຮຽນແມ່ນ 1 ຫຼື 2 ວັນ ຕາມເງື່ອນໄຂທີ່ເໝາະສົມ.

ພາຍຫຼັງຈັດຕັ້ງຮໍ່າຮຽນສໍາເລັດແລ້ວ ລາຍງານຜົນໄດ້ຮັບໃຫ້ຄະນະໂຄສະນາອົບຮົມສູນກາງພັກ.

ດັ່ງນັ້ນ, ຈຶ່ງແນະນໍາມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

# <u>ບົດທີ</u> 1
# ຄວາມຮູ້ພື້ນຖານກ່ຽວກັບລັດທິມາກ-ເລນິນ

## I. ຄວາມສຳນຶກ, ທາດແທ້ ແລະ ທັດສະນະຂອງພັກປະຊາຊົນປະຕິວັດລາວ ກ່ຽວກັບລັດທິມາກ-ເລນິນ.

### 1. ຄວາມສຳນຶກ ແລະ ທາດແທ້ຂອງລັດທິມາກ-ເລນິນ.

+ ລັດທິມາກ-ເລນິນ ແມ່ນທິດສະດີທີ່ຄົ້ນຄວ້າກ່ຽວກັບກົດເກນລວມແຫ່ງການກຳເນີດ, ຄືງຕົວ ແລະ ຂະຫຍາຍຕົວຂອງທຳມະຊາດ, ສັງຄົມ ແລະ ຈິນຕະນາການ.

+ ລັດທິມາກ-ເລນິນ ແມ່ນທິດສະດີປະຕິວັດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທີ່ກ້າວໜ້າໃນໂລກ.

+ ລັດທິມາກ-ເລນິນ ແມ່ນທິດສະດີວິທະຍາສາດ ກ່ຽວກັບການສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ.

+ ລັດທິມາກ-ເລນິນ ແມ່ນໝາກຜົນລວມຍອດທາງດ້ານສະຕິປັນຍາຂອງມວນມະນຸດ. ເລນິນໄດ້ສອນໄວ້ວ່າ: ລັດທິມາກ-ເລນິນບໍ່ແມ່ນຄຳພີ, ແຕ່ແມ່ນທິດນຳໃນການເຄື່ອນໄຫວຕົວຈິງ.

### 2. ທາດແທ້ຂອງລັດທິມາກ-ເລນິນ.

+ ລັດທິມາກ-ເລນິນ ແມ່ນທິດສະດີປະຕິວັດ ແລະ ວິທະຍາສາດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທີ່ກ້າວໜ້າໃນໂລກ.

+ ລັກສະນະປະຕິວັດ ຂອງລັດທິມາກ-ເລນິນ ສະແດງອອກດັ່ງນີ້:

- ທິດສະດີມາກ-ເລນິນ ບໍ່ພຽງແຕ່ແມ່ນການຮັບຮູ້ໂລກ (ທຳມະຊາດ, ສັງຄົມ ແລະ ຈິນຕະນາການ) ເທົ່ານັ້ນ, ແຕ່ສິ່ງສຳຄັນແມ່ນການດັດສ້າງໂລກ ເພື່ອຮັບໃຊ້ຜົນປະໂຫຍດຂອງມວນມະນຸດເປັນຕົ້ນແມ່ນ ເພື່ອຮັບໃຊ້ຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ.

- ທິດສະດີມາກ-ເລນິນ ບໍ່ແມ່ນທິດສະດີສົມບູນ, ຕຳລາຄຳພີຕາຍຕົວ ແລະ ແຂງກະດ້າງ, ແຕ່ແມ່ນລະບົບທິດສະດີທີ່ກຳເນີດ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ໂດຍຜ່ານພຶດຕິກຳແຫ່ງການຜະລິດວັດຖຸສິ່ງຂອງ, ພຶດຕິກຳແຫ່ງການປ່ຽນແປງດ້ານການເມືອງ-ສັງຄົມ ແລະ ພຶດຕິກຳແຫ່ງການຂະຫຍາຍຕົວດ້ານວິທະຍາສາດ-ເຕັກໂນໂລຊີ.

+ ລັກສະນະວິທະຍາສາດ ຂອງລັດທິມາກ-ເລນິນ ສະແດງອອກດັ່ງນີ້:

- ທິດສະດີມາກ-ເລນິນ ໄດ້ສ່ອງແສງເຖິງບັນດາກົດເກນພາວະວິໄສຂອງທຳມະຊາດ, ສັງຄົມ ແລະ ຈິນຕະນາການຢ່າງຖືກຕ້ອງ ໂດຍອີງໃສ່ຜົນສຳເລັດ ຂອງບັນດາຂະແໜງການວິທະຍາສາດ.

- ທິດສະດີມາກ-ເລນິນ ໄດ້ສັງເກດຕີລາຄາສິ່ງວັດຖຸ ແລະປະກົດການຕ່າງໆ ຫຼື ເບິ່ງໂລກຢູ່ ໃນສາຍກ່ຽວພັນແບບກາຍອິນຊີ; ພິຈາລະນາແກ້ໄຂສິ່ງວັດຖຸຢູ່ໃນທ່າເຄື່ອນເໜັງ ແລະ ຂະຫຍາຍຕົວ; ຊອກຮູ້ຂໍ້ຂັດແຍ່ງຢູ່ໃນສິ່ງວັດຖຸ ແລະ ວິທີການແກ້ໄຂຂໍ້ຂັດແຍ່ງນັ້ນຢ່າງຖືກຕ້ອງ.

- ທັດສະດີມາກ-ເລນິນ ແມ່ນທັດສະດີທີ່ເປັນເອກະພາບ ຊຶ່ງລວມມີ ປັດຊະຍາ, ເສດຖະສາດການເມືອງ ແລະ ລັດທິສັງຄົມນິຍົມວິທະຍາສາດ.

### 3. ທັດສະນະຂອງພັກ ກ່ຽວກັບລັດທິມາກ-ເລນິນ.

- ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດເປັນຕົ້ນມາ ໄດ້ຖືເອົາ**ລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ** ແລະ ມູນເຊື້ອອັນດີງາມຂອງພັກ ເປັນພື້ນຖານແນວຄິດ, ທິດສະດີຂອງພັກ ແລະ ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ.

- ສະມາຊິກພັກປະຊາຊົນປະຕິວັດລາວ ທຸກສະຫາຍມີໜ້າທີ່ຮ່ຳຮຽນທິດສະດີມາກ-ເລນິນ.

- ພັກປະຊາຊົນປະຕິວັດລາວ ໄດ້ຕັກເຕືອນສະມາຊິກພັກ ສະເໝີວ່າ: ການຮັບຮູ້ ແລະ ເຂົ້າໃຈ ລັດທິມາກ-ເລນິນ ບໍ່ແມ່ນແບບທ່ອງຂຶ້ນໃຈ, ແຕ່ແມ່ນການຄົ້ນຄວ້າກຳແໜ້ນຫຼັກມູນຂອງທິດສະດີດັ່ງກ່າວ ແລະ ໝູນໃຊ້ບັນດາຫຼັກມູນນັ້ນຢ່າງປະດິດສ້າງ ໂດຍເລີ່ມຈາກການໄຈ້ແຍກສະພາວະຄວາມເປັນຈິງ ຂອງປະເທດເຮົາໃນແຕ່ລະໄລຍະ.

## II. ເນື້ອໃນຕົ້ນຕໍຂອງລັດທິມາກ-ເລນິນ.

### 1. ເນື້ອໃນຕົ້ນຕໍຂອງປັດຊະຍາມາກ-ເລນິນ.

- ປັດຊະຍາມາກ-ເລນິນ ແມ່ນປັດຊະຍາວັດຖຸນິຍົມ ຊຶ່ງກົງກັນຂ້າມກັບປັດຊະຍາຈິດຕະນິຍົມຢ່າງສິ້ນເຊີງ, ໃນປັດຊະຍາມາກ-ເລນິນ ໄດ້ຢັ້ງຢືນວ່າ ວັດຖຸເກີດກ່ອນຈິດໃຈ, ຄົນເຮົາສາມາດຮັບຮູ້

ແລະ ສາມາດດັດສ້າງໂລກໄດ້.

- ປັດຊະຍາມາກ-ເລນິນ ຢັ້ງຢືນວ່າ ວັດຖຸມີບົດບາດຕັດສິນຈິດໃຈ (ເງື່ອນໄຂດຳລົງຊີວິດຂອງຄົນຕັດສິນຈິດໃຈ ຫຼື ສະຕິຂອງຄົນ), ແຕ່ເມື່ອຄົນເກີດມີຈິດໃຈ (ສະຕິ) ແລ້ວ, ສະຕິພັດມີບົດບາດກະທົບຄືນຕໍ່ວັດຖຸທັງໃນດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້.

ສັງລວມ: ບົດບາດຂອງວັດຖຸພາໃຫ້ເກີດມີສະຕິ, ບົດບາດຂອງສະຕິພາໃຫ້ຄົນຮັບຮູ້ໂລກ ແລະ ດັດສ້າງໂລກໄດ້; ບົດບາດຂອງສະຕິເນື້ອແທ້ແມ່ນບົດບາດຂອງຄົນ.

- ປັດຊະຍາມາກ-ເລນິນ ປະກອບດ້ວຍ 2 ພາກສ່ວນຄື: ລັດທິວັດຖຸນິຍົມສັດຈະວິພາກ ແລະ ລັດທິວັດຖຸນິຍົມປະຫວັດວິພາກ.

**+ ລັດທິວັດຖຸນິຍົມສັດຈະວິພາກ:** ແມ່ນທິດສະດີທີ່ອະທິບາຍໂລກ ໂດຍສະເພາະແມ່ນລົງເລິກ ຄົ້ນຄວ້າ, ອະທິບາຍກົດເກນລວມແຫ່ງການກຳເນີດ, ຄົງຕົວ, ຂະຫຍາຍຕົວຂອງວັດຖຸ ແລະ ຈິດໃຈ (ທຳມະຊາດ ແລະ ຈິນຕະນາການ).

• ລັດທິວັດຖຸນິຍົມສັດຈະວິພາກ ກັບວິທີວັດຖຸນິຍົມສັດຈະວິພາກແມ່ນ 2 ດ້ານທີ່ເປັນເອກະພາບກັນ ຂອງປັດຊະຍາມາກ-ເລນິນ. ໃນນັ້ນ, ວິທີວັດຖຸນິຍົມສັດຈະວິພາກ ແມ່ນທິດສະດີກ່ຽວກັບວິທະຍາໃນການເບິ່ງບັນຫາ, ແກ້ໄຂບັນຫາຕ່າງໆຂອງໂລກຢ່າງຖືກຕ້ອງ, ສົມເຫດ, ສົມຜົນ. ວິທີນີ້ເບິ່ງສິ່ງວັດຖຸ ແລະ ປະກົດການຕ່າງໆຢູ່ໃນສາຍກ່ຽວພັນ, ເຄື່ອນເໜັງ ແລະ ຢູ່ໃນທ່າຂະຫຍາຍຕົວ.

• ວິທີວັດຖຸນິຍົມສັດຈະວິພາກ ຖືວ່າສິ່ງວັດຖຸ ແລະ ປະກົດການລ້ວນແຕ່ມີຄວາມເປັນເອກະພາບກັນຢູ່ໃນລັກສະນະສິ່ງວັດຖຸ;

ລ້ວນແຕ່ມີສາຍກ່ຽວພັນແບບກາຍອິນຊີ ແລະ ມີການກະທົບເຊິ່ງກັນ ແລະ ກັນ ພາໃຫ້ເກີດວັດຖຸມີການເຄື່ອນເໜັງ, ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

• ວັດຖຸນິຍົມສັດຈະວິພາກ ຢັ້ງຢືນວ່າ ທຸກສິ່ງວັດຖຸ ແລະ ປະກົດການລ້ວນແຕ່ມີຂໍ້ຂັດແຍ່ງ ຫຼື ບັນດາດ້ານທີ່ກົງກັນຂ້າມ; ບັນດາດ້ານທີ່ກົງກັນຂ້າມຢູ່ໃນສິ່ງວັດຖຸ ມີທັງຄວາມເປັນເອກະພາບກັນ ມີທັງຕໍ່ສູ້ກັນ ແລະ ຈາກການຕໍ່ສູ້ຂອງບັນດາດ້ານທີ່ກົງກັນຂ້າມນັ້ນ ເຮັດໃຫ້ວັດຖຸມີການປ່ຽນຈາກປະລິມານໄປສູ່ຄຸນນະພາບໃໝ່; ອັນໃໝ່ເກີດຂຶ້ນ ບົນພື້ນຖານການປະຕິເສດອັນເກົ່າ, ແຕ່ການປະຕິເສດແບບວັດຖຸນິຍົມສັດຈະວິພາກນັ້ນ ບໍ່ແມ່ນການປະຕິເສດອັນເກົ່າຢ່າງສິ້ນເຊີງ ແຕ່ຫາກຍັງຮັກສາສິ່ງຕັ້ງໜ້າຂອງອັນເກົ່າໄວ້; ວິທີວັດຖຸນິຍົມຍັງຊີ້ໃຫ້ເຫັນວ່າວັດຖຸມີການເຄື່ອນເໜັງ ແລະ ຂະຫຍາຍຕົວໄປຕາມກົດເກນ ແລະ ຄູ່ມາດຕະເກນຂອງມັນ.

+ **ລັດທິວັດຖຸນິຍົມປະຫວັດວິພາກ:** ແມ່ນທິດສະດີວິທະຍາສາດກ່ຽວກັບການເບິ່ງສັງຄົມມະນຸດ ແລະ ປະຫວັດສາດແຫ່ງການກຳເນີດ, ຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມມະນຸດ ໃນແຕ່ລະຍຸກສະໄໝ.

• ລັດທິວັດຖຸນິຍົມປະຫວັດວິພາກ ໄດ້ຢັ້ງຢືນວ່າ ມະນຸດກຳເນີດ, ຄົງຕົວ ແລະ ຂະຫຍາຍຕົວ ຍ້ອນມີການອອກແຮງງານ ແລະ ການອອກແຮງງານຜະລິດວັດຖຸສິ່ງຂອງແມ່ນພື້ນຖານແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມມະນຸດ.

• ລັດທິວັດຖຸນິຍົມປະຫວັດວິພາກ ໄດ້ຊີ້ໃຫ້ເຫັນວ່າ ເພື່ອ

ຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸຂອງສັງຄົມທີ່ນັບມື້ສູງຂຶ້ນນັ້ນ, ການຜະລິດວັດຖຸສິ່ງຂອງຕ້ອງມີແບບວິທີການຜະລິດ. ດັ່ງນັ້ນ, ແບບວິທີການຜະລິດ ຈຶ່ງແມ່ນປັດໄຈຕັດສິນການຂະຫຍາຍຕົວຂອງສັງຄົມມະນຸດ ແລະ ເປັນໄມ້ຫຼາວັດແທກແຕ່ລະຮູບການເສດຖະກິດ-ສັງຄົມແຕ່ລະລະບອບສັງຄົມມະນຸດ.

- ລັດທິວັດຖຸນິຍົມປະຫວັດວິພາກ ຢັ້ງຢືນວ່າ ກົດເກນການພົວພັນການຜະລິດສອດຄ່ອງກັບລັກສະນະ ແລະ ລະດັບການຂະຫຍາຍຕົວຂອງກຳລັງການຜະລິດ ແມ່ນກົດເກນລວມ ທີ່ຄອບງຳທຸກຮູບການເສດຖະກິດ-ສັງຄົມ ແລະ ປັດໄຈຕັດສິນການຂະຫຍາຍຕົວຂອງສັງຄົມມະນຸດ ຈາກສັງຄົມນີ້ໄປສູ່ສັງຄົມອື່ນ.

## 2. <u>ເນື້ອໃນຕົ້ນຕໍຂອງເສດຖະສາດການເມືອງ.</u>

- ເສດຖະສາດການເມືອງມາກ-ເລນິນ ແມ່ນທິດສະດີວິທະຍາສາດທີ່ຄົ້ນຄວ້າກ່ຽວກັບສາຍກ່ຽວພັນ ລະຫວ່າງຄົນກັບຄົນໃນຂະບວນວິວັດແຫ່ງການຜະລິດ, ການແຈກຢາຍ, ການແລກປ່ຽນ ແລະ ການຊົມໃຊ້ຜົນຜະລິດໃນສັງຄົມ.

- ເສດຖະສາດການເມືອງມາກ-ເລນິນ ແມ່ນທິດສະດີວິທະຍາສາດ ທີ່ຄົ້ນຄວ້າກ່ຽວກັບກົດເກນເສດຖະກິດທີ່ຄົງຕົວ ແລະ ມີຜົນກະທົບຢ່າງພາວະວິໄສ ຢູ່ໃນສັງຄົມໃດໜຶ່ງເປັນຕົ້ນແມ່ນກົດເກນສອດຄ່ອງ ລະຫວ່າງການພົວພັນການຜະລິດກັບລັກສະນະ ແລະ ລະດັບການຂະຫຍາຍຕົວຂອງກຳລັງການຜະລິດ.

- ເສດຖະສາດການເມືອງມາກ-ເລນິນ ແມ່ນວິທະຍາສາດໃນການສ້າງພື້ນຖານເສດຖະກິດ ຂອງລະບອບສັງຄົມນິຍົມ.

- ເສດຖະສາດການເມືອງມາກ-ເລນິນ ໄດ້ຊີ້ໃຫ້ເຫັນກົດເກນເສດຖະກິດທີ່ຄອບງຳສັງຄົມນາຍທຶນນັ້ນ ແມ່ນກົດເກນການຜະລິດມູນຄ່າສ່ວນເກີນ ແລະ ກົນໄກສ້າງຮັ່ງຄູນມີຂອງພວກນາຍທຶນແມ່ນການຂູດຮີດມູນຄ່າສ່ວນເກີນຈາກແຮງງານຂອງກຳມະກອນ.

- ເສດຖະສາດການເມືອງມາກ-ເລນິນ ໄດ້ຢັ້ງຢືນວ່າ ຊົນຊັ້ນກຳມະກອນ ມີຄວາມອາດສາມາດໂຄ່ນລົ້ມຊົນຊັ້ນນາຍທຶນຂູດຮີດ ແລະ ຕີລາຄາວ່າການປະຕິວັດກຳມະຊີບ ຈະໄດ້ຮັບໄຊຊະນະຢູ່ບັນດາປະເທດນາຍທຶນຂະຫຍາຍຕົວ.

- ເສດຖະສາດການເມືອງມາກ-ເລນິນ ໄດ້ຄົ້ນຄວ້າການຂະຫຍາຍຕົວຂອງທຶນນິຍົມສູງສຸດ (ຈັກກະພັດນິຍົມ); ໄດ້ຊີ້ໃຫ້ເຫັນວ່າທຶນນິຍົມແຫ່ງລັດ ແມ່ນປາກປະຕູໄປສູ່ສັງຄົມນິຍົມ ແລະ ຄວາມສາມາດຍາດໄດ້ໄຊຊະນະ ຂອງການປະຕິວັດກຳມະຊີບຢູ່ປະເທດນາຍທຶນຈຳນວນໜຶ່ງ ຊຶ່ງບໍ່ຈຳເປັນຕ້ອງແມ່ນປະເທດທຶນນິຍົມຂະຫຍາຍຕົວ.

- ເສດຖະສາດການເມືອງມາກ-ເລນິນ ຢັ້ງຢືນວ່າທາດແທ້ຂອງລະບອບທຶນນິຍົມ ແມ່ນການຂູດຮີດແຮງງານສ່ວນເກີນ, ຂໍ້ຂັດແຍ່ງພື້ນຖານຂອງທຶນນິຍົມຍັງບໍ່ທັນໄດ້ຮັບການແກ້ໄຂ, ວິກິດການຮອບດ້ານຂອງທຶນນິຍົມຍັງສະແດງອອກໃນຫຼາຍຮູບການ; ລັດທິທຶນນິຍົມຜູກຂາດ ທີ່ປັບຕົວໃຫ້ແທດເໝາະກັບວິທະຍາສາດ ແລະ ເຕັກໂນໂລຊີແມ່ນໄລຍະທ້າຍຂອງທຶນນິຍົມ.

### 3. ເນື້ອໃນຕົ້ນຕໍຂອງລັດທິສັງຄົມນິຍົມວິທະຍາສາດ.

- ລັດທິສັງຄົມນິຍົມວິທະຍາສາດ ແມ່ນທິດສະດີວິທະຍາສາດ

ທີ່ຄົ້ນຄວ້າກ່ຽວກັບບັນດາກົດເກນແຫ່ງການຂະຫຍາຍຕົວ ຂອງສັງຄົມມະນຸດ ເປັນຕົ້ນແມ່ນການຄົ້ນຄວ້າກ່ຽວກັບສາເຫດທີ່ເຮັດໃຫ້ສັງຄົມນີ້ພັງທະລາຍ ແລ້ວສັງຄົມໃໝ່ເກີດຂຶ້ນແທນ.

- ລັດທິສັງຄົມນິຍົມວິທະຍາສາດ ແມ່ນທິດສະດີປະຕິວັດ ແລະ ວິທະຍາສາດເພື່ອປົດປ່ອຍຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານອອກຈາກການຂູດຮີດ ແລະ ກໍ່ສ້າງສັງຄົມນິຍົມ.

- ລັດທິສັງຄົມນິຍົມວິທະຍາສາດ ຄົ້ນຄວ້າບັນດາກົດເກນທາງດ້ານການເມືອງ-ສັງຄົມ ຂອງຮູບການເສດຖະກິດ-ສັງຄົມນິຍົມ ເຊັ່ນ: ພາລະກຳປະຫວັດສາດຂອງຊົນຊັ້ນກຳມະກອນ, ບົດບາດການນຳພາຂອງພັກກອມມູນິດ, ບັນຫາພັນທະພາບຂອງຊົນຊັ້ນກຳມະກອນ-ຊາວກະສິກອນ ແລະ ນັກຮຽນຮູ້ປັນຍາຊົນປະຕິວັດ...

- ລັດທິສັງຄົມນິຍົມວິທະຍາສາດ ໄດ້ຢັ້ງຢືນວ່າ ສັງຄົມນິຍົມແມ່ນຜະລິດຕະພັນຂອງມວນມະນຸດ; ນັບແຕ່ລະບອບຂ້າທາດເປັນຕົ້ນມາ, ແນວຄິດກ່ຽວກັບສັງຄົມນິຍົມໄດ້ກຳເນີດຂຶ້ນ ແລະ ຂະຫຍາຍຕົວເປັນທິດສະດີສັງຄົມນິຍົມໄຝ່ຝັນ ຊຶ່ງມີນັກທິດສະດີຈຳນວນໜຶ່ງເປັນຕົວແທນ ແລະ ທິດສະດີດັ່ງກ່າວມີທັງຈຸດດີ, ຈຸດອ່ອນ.

- ມາກ-ອັງແກນ ໄດ້ສືບທອດສິ່ງທີ່ມີຄຸນຄ່າ (ຈຸດດີ) ຂອງທິດສະດີກ່ຽວກັບສັງຄົມນິຍົມໄຝ່ຝັນ ພ້ອມທັງຄົ້ນຄວ້າຊອກເຫັນພາລະກຳປະຫວັດສາດຂອງຊົນຊັ້ນກຳມະກອນ ແມ່ນຜູ້ຂຸດຂຸມຝັງລັດທິທຶນນິຍົມ.

- ລັດທິສັງຄົມນິຍົມວິທະຍາສາດໄດ້ຢັ້ງຢືນວ່າຊົນຊັ້ນກຳມະຊີບຢາກເຮັດຫຼ້ອນພາລະກຳປະຫວັດສາດຂອງຕົນຕ້ອງມີພັກກອມ

ມູນິດນຳພາ ແລະ ຕ້ອງຍຶດອຳນາດການປົກຄອງໃຫ້ໄດ້.

- ລັດທິສັງຄົມນິຍົມວິທະຍາສາດ ກາຍເປັນຈິງດ້ວຍມະຫາປະຕິວັດ ເດືອນຕຸລາ ຂອງລັດເຊຍ ປີ 1917 ພາຍໃຕ້ການນຳພາຂອງພັກໂບນເຊວິກ (ພັກກອມມູນິດ) ຊຶ່ງແມ່ນ ທ່ານ ເລນິນ ເປັນຫຼັກແຫຼ່ງໃນການສ້າງຕັ້ງ ແລະ ນຳພາ.

## ບົດທີ 2
## ວຽກງານການກໍ່ສ້າງ ແລະ ປັບປຸງພັກ

### I. ຄວາມໝາຍສຳຄັນ ແລະ ຄວາມຈຳເປັນຂອງວຽກງານກໍ່ສ້າງ ແລະ ປັບປຸງພັກ.

ນັບແຕ່ມື້ພັກປະຊາຊົນປະຕິວັດລາວ ໄດ້ຮັບການສ້າງຕັ້ງຂຶ້ນ, ພັກໄດ້ກຳນົດໜ້າທີ່ ຫຼື ພາລະກຳປະຫວັດສາດຂອງຕົນໄວ້ວ່າ: ພັກນຳພາປະຊາຊົນລາວບັນດາເຜົ່າຕໍ່ສູ້ຍາດເອົາຄວາມເປັນເອກະລາດ ແລະ ສິດເປັນເຈົ້າຕົນເອງ, ປົດປ່ອຍປະເທດຊາດອອກຈາກແອກປົກຄອງຂອງລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່, ຈາກນັ້ນຈຶ່ງນຳພາປະເທດຊາດໃຫ້ບັນລຸຕາມຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ, ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕຍຸຕິທຳ ແລະ ສີວິໄລ.

ພາລະກຳປະຫວັດສາດ ດັ່ງກ່າວນັ້ນ ແມ່ນຂອງປະຊາຊົນຊາວຜູ້ອອກແຮງງານບັນດາເຜົ່າ ແລະ ຊັ້ນຄົນທີ່ກ້າວໜ້າ ໄດ້ຮັບມອບໝາຍໃຫ້ພັກເຮົາ, ອັນນັ້ນແມ່ນກຽດສະຫງ່າຂອງພັກເຮົາ. ສະນັ້ນ, ເພື່ອເຮັດຫຼ້ອນພາລະກຳປະຫວັດສາດ ພັກເຮົາຈຳເປັນຕ້ອງກໍ່ສ້າງ ແລະ ປັບປຸງຕົນເອງໃຫ້ມີຄວາມປອດໃສ ໜັກແໜ້ນເຂັ້ມແຂງໃນທຸກດ້ານອັນນັ້ນແມ່ນຄວາມຈຳເປັນພາວະວິໄສ ເພາະການນຳພາຂອງພັກ ແມ່ນເງື່ອນໄຂຕັດສິນໄຊຊະນະ ແລະ ຜົນສຳເລັດ

ແຫ່ງການສ້າງສາພັດທະນາປະເທດຊາດ ຕາມຈຸດໝາຍສັງຄົມນິຍົມ. ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ຍັງໄດ້ເນັ້ນໜັກວ່າ: **" ຕ້ອງປັບປຸງ ແລະ ກໍ່ສ້າງພັກ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ ເຂັ້ມແຂງ ແລະ ປອດໃສທາງດ້ານການຈັດຕັ້ງ ແລະ ແບບແຜນການນຳພາ, ມີຄວາມສາມາດນຳພາສູງຂຶ້ນເພື່ອເປັນກອງນຳໜ້າ ແລະ ເປັນແກນນຳທີ່ໝັ້ນຄົງໃນລະບົບການເມືອງປະຊາທິປະໄຕປະຊາຊົນ."**

## II. ຫຼັກການ ແລະ ທິດນຳຂອງວຽກງານກໍ່ສ້າງ ແລະ ປັບປຸງພັກ.

### 1. ຫຼັກການຂອງການກໍ່ສ້າງ ແລະ ປັບປຸງພັກ.

**- ການກໍ່ສ້າງ ແລະ ປັບປຸງຕົນເອງປະຕິບັດຕາມ 5 ຫຼັກການດັ່ງນີ້:**

① ພັກປະຊາຊົນປະຕິວັດລາວ ຢຶດໝັ້ນລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກເປັນພື້ນຖານແນວຄິດ, ທິດສະດີຂອງພັກ, ເສີມຂະຫຍາຍລັກສະນະນຳໜ້າ, ລັກສະນະສຶກສາອົບຮົມ ແລະ ລັກສະນະຕໍ່ສູ້ຂອງຊົນຊັ້ນກຳມະກອນ, ກໍ່ສ້າງ ແລະ ປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

② ພັກປະຊາຊົນປະຕິວັດລາວ ຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ພັກມີລະບຽບວິໄນເຂັ້ມງວດ, ເຄົາລົບ, ປະຕິບັດລັດຖະທຳມະນູນ

ແລະ ກົດໝາຍ, ສະມາຊິກພັກສະເໝີພາບກັນບົນພື້ນຖານກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

③ ພັກປະຊາຊົນປະຕິວັດລາວ ຖືເອົາຄວາມສາມັກຄີເປັນປຶກແຜ່ນເປັນຫຼັກການພື້ນຖານຂອງພັກບົນພື້ນຖານແນວທາງ, ນະໂຍບາຍ ແລະ ກົດລະບຽບຂອງພັກ, ຮັບປະກັນຄວາມສະເໝີພາບທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ການກະທຳຂອງພັກ.

④ ພັກປະຊາຊົນປະຕິວັດລາວ ຖືເອົາປະຊາຊົນເປັນກົກ, ຮັບໃຊ້ປະຊົນດ້ວຍຄວາມບໍລິສຸດສັດຊື່, ເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ, ອີງໃສ່ມະຫາຊົນ ແລະ ຜ່ານຂະບວນການປະຕິວັດຂອງມະຫາຊົນ ເພື່ອກໍ່ສ້າງ ແລະ ຂະຫຍາຍພັກ.

⑤ ພັກປະຊາຊົນປະຕິວັດລາວ ຖືເອົາການຕິຊົມຂອງຕົນເອງ, ຕິຊົມກັນເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ.

**2. <u>ທິດນຳຂອງການກໍ່ສ້າງ ແລະ ປັບປຸງພັກ</u>.**

**- ກໍ່ສ້າງ ແລະ ປັບປຸງພັກຕາມ 3 ທິດນຳດັ່ງນີ້:**

① ກໍ່ສ້າງພັກໃຫ້ມີຄວາມປອດໃສ, ໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນການນຳພາຂອງພັກ, ເພີ່ມທະວີວຽກງານປ້ອງກັນພັກ, ເດັດດ່ຽວຕ້ານການເສື່ອມຄຸນທາດການເມືອງພາຍໃນພັກ.

② ກໍ່ສ້າງ, ປັບປຸງພັກ ຕ້ອງຖືເອົາຄຸນນະພາບເປັນກົກ, ຮັບເອົາຜູ້ດີເດັ່ນ, ມີມາດຖານ ແລະ ເງື່ອນໄຂຄົບຖ້ວນເຂົ້າເປັນສະມາ

ຊິກພັກ, ເດັດດ່ຽວເອົາຜູ້ເສື່ອມຄຸນປ່ຽນທາດອອກຈາກພັກ, ບູລະນະ ແລະ ພັດທະນາຕົນເອງຢ່າງບໍ່ຢຸດຢັ້ງ ເພື່ອໃຫ້ທຽບທັນກັບຄວາມຮຽກຮ້ອງຕ້ອງການແຫ່ງການນຳພາຂອງພັກໃນແຕ່ລະໄລຍະ.

③ ສົມທົບແໜ້ນລະຫວ່າງການເພີ່ມທະວີການນຳພາຂອງພັກ ກັບການເຊີດຊູຄວາມສັກສິດໃນການຄຸ້ມຄອງລັດ, ເສີມຂະຫຍາຍບົດບາດເປັນເຈົ້າການຂອງແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ.

## III. <u>ເນື້ອໃນຂອງວຽກງານກໍ່ສ້າງ ແລະ ປັບປຸງພັກ</u>.

### 1. <u>ກໍ່ສ້າງ ແລະ ປັບປຸງພັກດ້ານການເມືອງ-ແນວຄິດ</u>.

- ຍຶດໝັ້ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກ, ເປັນພື້ນຖານແນວຄິດ, ທິດສະດີຂອງພັກ, ທາດແທ້ປະຕິວັດຂອງຊົນຊັ້ນກຳມະກອນ ແລະ ຈຸດໝາຍສັງຄົມນິຍົມ. ຕ້ອງເດັດດ່ຽວຕອບຕ້ານການບິດເບືອນ, ການໃສ່ຮ້າຍປ້າຍສີ, ທັບຖົມໂຈມຕີ ແລະ ການເຄື່ອນໄຫວອິດທິກຳລັງປໍລະປັກທີ່ຫວັງທຳລາຍມ້າງເພລະບອບໃໝ່ຂອງພັກເຮົາ.

- ມີແນວຄິດປະຕິວັດບຸກຄືː ເສີມຂະຫຍາຍລັກສະນະນຳໜ້າ ແລະ ຈິດໃຈຮັບໃຊ້ຊາດຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດສັດຊື່, ຜ່ານຜ່າຄວາມຫຍຸ້ງຍາກເພື່ອເຮັດສຳເລັດໜ້າທີ່, ປົກປັກຮັກສາ ແລະ ພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ຄວາມດ້ອຍພັດທະນາບົນຈິດໃຈເອກະລາດເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

- ກໍ່ສ້າງພັກ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານແນວຄິດ, ຄະນະພັກທຸກຂັ້ນ, ສະມາຊິກພັກທຸກຄົນຕ້ອງຖືເອົາການອ່ານ, ການຄົ້ນຄວ້າກຳແໜ້ນມະຕິ, ແນວທາງນະໂຍບາຍຂອງພັກ ແລະ ທິດສະດີຕ່າງໆ ເປັນບັນຫາສຳຄັນ.

**2. ດ້ານການຈັດຕັ້ງ.**

ຕ້ອງປັບປຸງ ແລະ ກໍ່ສ້າງພັກໃຫ້ເປັນກຳລັງນຳໜ້າທີ່ມີຄວາມຕື່ນຕົວສູງຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວ, ຄະນະພັກ ແລະ ສະມາຊິກພັກມີຄວາມສາມັກຄີເປັນເອກະພາບພາຍໃນ, ມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນຂອງພັກ ແລະ ເຮັດສຳເລັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຢ່າງມີປະສິດທິຜົນ.

- ຍຶດໝັ້ນຫຼັກການລວມສູນປະຊາທິປະໄຕໄປພ້ອມກັບການປະຕິບັດລະບຽບວິໄນຢ່າງເຂັ້ມງວດ ໝາຍຄວາມວ່າ ຕ້ອງຮັບປະກັນໃຫ້ສະມາຊິກພັກແຕ່ລະຄົນໄດ້ປະຕິບັດສິດ ແລະ ພັນທະຢ່າງຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ, ຮັບປະກັນໃຫ້ທຸກຄົນຕ້ອງເວົ້າ ແລະ ປະຕິບັດຕາມມະຕິຂອງພັກ, ທຸກຄົນຕ້ອງເຮັດຕາມການຈັດຕັ້ງ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ, ຄະນະພັກທຸກຂັ້ນ ແລະ ທົ່ວພັກຕ້ອງປະຕິບັດຕາມມະຕິ ຂອງຄະນະບໍລິຫານງານສູນກາງພັກ, ເດັດດ່ຽວຕ້ານ ແລະ ກຳຈັດປັດເປົ່າພະຍາດອາດຍາສິດ ແລະ ເອກະຊົນພາຍໃນພັກ.

- ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ໃຫ້ໜັກແໜ້ນທາງດ້ານແນວຄິດ ແລະ ການກະທຳ, ຕ້ານແນວຄິດ

ຫຼາຍພັກ, ຫຼາຍເຄົ້າ, ເອກະຊົນ, ຈຸ້ມເຈື້ອ, ພັກພວກ, ທ້ອງຖິ່ນ... ທີ່ເປັນການແບ່ງແຍກກຸ່ມກ້ອນພາຍໃນພັກ.

- ພັກຕ້ອງມີຄວາມປອດໃສ ແລະ ມີຄວາມໜັກແໜ້ນເຂັ້ມແຂງສະມາຊິກພັກທຸກຄົນ ຕ້ອງຄົ້ນຄວ້າເຊື່ອມຊຶມ ແລະ ກຳແໜ້ນກົດລະບຽບພັກ, ເຄົາລົບກົດໝາຍຂອງລັດຢ່າງເຂັ້ມງວດ, ເອົາຜູ້ທີ່ເສື່ອມຄຸນປ່ຽນທາດຂາດຄຸນສົມບັດສິນທຳປະຕິວັດ, ພວກສໍ້ລາດບັງຫຼວງ, ຜູ້ທີ່ຂາດຄວາມເປັນແບບຢ່າງ, ຂາດມາດຖານສະມາຊິກພັກ ອອກຈາກພັກ. ຖ້າບໍ່ດັ່ງນັ້ນ ບົດບາດຂອງພັກ ແລະ ກົດລະບຽບຂອງພັກນັ້ນກໍຈະບໍ່ມີຄຸນຄ່າຫຍັງເລີຍ.

**3. ດ້ານແບບແຜນວິທີນຳພາ.**

ການປັບປຸງກໍ່ສ້າງພັກໃຫ້ປອດໃສເຂັ້ມແຂງນັ້ນ ຍາມໃດກໍຕິດແໜ້ນກັບການປັບປຸງແບບແຜນການນຳພາຂອງພັກ, ແບບແຜນການນຳພາຂອງພັກ ແມ່ນການວາງແນວທາງ, ການອອກມະຕິ, ການໂຄສະນາປຸກລະດົມຕິດພັນກັບຄວາມເປັນແບບຢ່າງ, ຝຶກອົບຮົມຍົກລະດັບ ແລະ ຄຸ້ມຄອງນຳໃຊ້ພະນັກງານ, ກວດກາຕໍ່ອົງການຂະແໜງການ, ໜ່ວຍງານ ແລະ ບຸກຄົນທີ່ຢູ່ໃຕ້ການນຳພາຂອງພັກ.

ການປັງປຸງແບບແຜນນຳພາ ໝາຍເຖິງປັບປຸງວິທີດຳເນີນວຽກງານຕ່າງໆເຫຼົ່ານັ້ນໃຫ້ດີ. ມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກໄດ້ເນັ້ນໜັກວ່າ ມີຄວາມຈຳເປັນຕ້ອງໄດ້ປັບປຸງແບບແຜນການນຳພາເພື່ອຍົກສູງຄວາມສາມາດກຳອຳນາດຂອງພັກ, ເຮັດໃຫ້ອຸດົມຄະຕິ ແລະ ຈຸດໝາຍຂອງພັກບັນລຸຜົນເປັນຈິງ.

- ຕັ້ງໜ້າເສີມຂະຫຍາຍແບບແຜນນຳພາ ອັນເປັນມູນເຊື້ອດີງາມຂອງພັກເຮົາຄື: ການເຄື່ອນໄຫວນຳພາຕາມແນວທາງມະຫາຊົນ, ອີງໃສ່ມະຫາຊົນ ຂຸດຄົ້ນກຳລັງແຮງມະຫາຊົນ ເພື່ອປະຕິບັດແນວທາງນະໂຍບາຍຂອງພັກ, ຕ້ອງເພີ່ມທະວີແບບແຜນການນຳພາທີ່ມີວິທະຍາສາດ, ແທດຕົວຈິງ ແລະ ປະຊາທິປະໄຕ.

- ຄະນະພັກແຕ່ລະຂັ້ນຕ້ອງສືບຕໍ່ຍຶດໝັ້ນ ແລະ ເສີມຂະຫຍາຍແບບແຜນການນຳພາ ທີ່ເປັນມູນເຊື້ອອັນດີງາມຂອງພັກເຮົາເປັນຕົ້ນແມ່ນການເຄື່ອນໄຫວນຳພາໂດຍຜ່ານແນວທາງ ແລະ ການຈັດຕັ້ງຂອງພັກເຮົາ, ເອົາການປຸກລະດົມຂົນຂວາຍ, ຊວນເຊື່ອສົມທົບຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ ແລະ ການຈັດຕັ້ງພັກແຕ່ລະຂັ້ນ ເປັນແບບແຜນ ແລະ ວິທີນຳພາຕົ້ນຕໍຂອງພັກ.

- ຄະນະພັກຂັ້ນຕ່າງໆ ແລະ ສະມາຊິກພັກທຸກຄົນຕ້ອງເພີ່ມທະວີຄວາມເປັນເຈົ້າການ, ມີຫົວຄິດປະດິດສ້າງໃນການຄົ້ນຄວ້າຮ່ຳຮຽນແນວທາງນະໂຍບາຍຂອງພັກ, ກຳແໜ້ນເນື້ອໃນສຳຄັນຂອງມະຕິ ແລະ ແນວທາງນະໂຍບາຍຂອງພັກ ແລ້ວສ້າງເປັນແຜນການ, ໂຄງການດຳເນີນງານ ແລະ ແຜນການເຄື່ອນໄຫວຂອງຄະນະພັກ, ຄະນະໜ່ວຍພັກໃຫ້ສອດຄ່ອງກັບສະພາບຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນຮາກຖານຂອງຕົນ.

- ເພີ່ມທະວີແບບແຜນນຳພາ ແລະ ວິທີເຮັດວຽກທີ່ມີວິທະຍາສາດ, ແທດຕົວຈິງ ແລະ ປະຊາທິປະໄຕ, ເອົາການເອົາງານ ແລະ ມີຄວາມຮັບຜິດຊອບສູງ, ເປັນເຈົ້າການຕໍ່ສູ້ຕ້ານ ແລະ ກຳຈັດປັດເປົ່າພະຍາດອາດຍາສິດ, ການເຮັດວຽກແບບຜິວເຜີນ, ຂາດຄວາມ

ຮັບຜິດຊອບ, ຕ້ານທັດສະນະແນວຄິດ ແລະ ການກະທຳທີ່ບໍ່ເຄົາລົບລະບຽບວິໄນ.

- ຕ້ອງຕິດຕາມກວດກາການຈັດຕັ້ງປະຕິບັດ ໃຫ້ເປັນປົກກະຕິ, ສະຫຼຸບຕີລາຄາຜົນໄດ້ຮັບ ແລະ ຖອດຖອນບົດຮຽນຂອງການຈັດຕັ້ງປະຕິບັດຕົວຈິງແຕ່ລະໄລຍະ, ປະຕິບັດຫຼັກການລວມສູນປະຊາທິປະໄຕໃຫ້ເຄັ່ງຄັດ, ແກ້ໄຂຄວາມຫຍຸ້ງຍາກ, ລະບອບລະບຽບທີ່ບໍ່ສອດຄ່ອງ, ຫຼຸດຜ່ອນການປະຊຸມ, ເວົ້າໄປພ້ອມກັບເຮັດຕົວຈິງ ແລະ ມີປະສິດທິຜົນ.

- ປັບປຸງການນຳພາຂອງພັກ ຕໍ່ອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງຂັ້ນຕ່າງໆ ຢູ່ຂັ້ນຮາກຖານ, ສ້າງລະບຽບການ ແລະ ປະສານສົມທົບລະຫວ່າງອົງການກ່ຽວຂ້ອງໃຫ້ແໜ້ນແຟ້ນ.

- ເສີມຂະຫຍາຍປະຊາທິປະໄຕພາຍໃນພັກ, ໜ່ວຍງານພັກຢ່າງກວ້າງຂວາງເຮັດໃຫ້ການນຳພາຂອງພັກແທດເຖິງຊີວິດຕົວຈິງ, ຮັບປະກັນໃຫ້ຄຳເວົ້າໄປພ້ອມກັບການຈັດຕັ້ງປະຕິບັດຕົວຈິງ ໃຫ້ມີຜົນສຳເລັດ, ກຳຈັດປັດເປົ່າ ຫຼື ຕ້ານແບບແຜນອາດຍາສິດ, ຫ່າງເຫີນຈາກມະຫາຊົນ, ຮາກຖານ, ຈາກຕົວຈິງເຮັດວຽກແບບມະລຸມມະລ້ວຍ.

# ບົດທີ 3

# ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງສະມາຊິກພັກ

## I. ຄວາມໝາຍ ແລະ ຄວາມຈຳເປັນໃນການຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

### 1. ຄວາມໝາຍຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

**1.1. ຄວາມໝາຍຂອງຄຸນທາດການເມືອງ.**

ຄຸນທາດການເມືອງ ແມ່ນໝາຍເຖິງທັດສະນະຊົນຊັ້ນ, ຫຼັກໝັ້ນມິດ-ສັດຕູ ແລະ ຄວາມເດັດດ່ຽວໝຽວແໜ້ນຕໍ່ອຸດົມການສັງຄົມນິຍົມ. ຄຸນທາດການເມືອງ ແມ່ນມາດຖານແຖວໜ້າຂອງພະນັກງານນຳພາ, ແມ່ນຄວາມຈຳເປັນອັນພື້ນຖານທີ່ຂາດບໍ່ໄດ້ ທັງແມ່ນພື້ນຖານໃຫ້ແກ່ການຝຶກຝົນຄຸນສົມບັດສິນທຳປະຕິວັດ ແລະ ການກະທຳຕົວຈິງຂອງພະນັກງານ, ສະມາຊິກພັກ.

ຄຸນທາດການເມືອງ ບໍ່ສະເພາະແຕ່ສ່ອງແສງເຖິງທັດສະນະຫຼັກໝັ້ນມິດ-ສັດຕູທີ່ໜັກແໜ້ນເທົ່ານັ້ນ, ແຕ່ມັນຍັງສ່ອງແສງເຖິງຄວາມສາມາດໃນການຈັດຕັ້ງປະຕິບັດແນວທາງຂອງພັກອີກ. ດ້ວຍເຫດນີ້ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ຄວາມສາມາດ ຈຶ່ງມີສາຍກ່ຽວພັນແບບກາຍອິນຊີ, ກາຍເປັນຄຸນນະພາບຂອງພະນັກງານ, ສະມາຊິກພັກຜູ້ໜຶ່ງ.

### 1.2. ຄວາມໝາຍຂອງຄຸນສົມບັດສິນທຳປະຕິວັດ.

ຄຸນສົມບັດສິນທຳປະຕິວັດຂອງພະນັກງານ, ສະມາຊິກພັກ ແມ່ນອົງປະກອບໜຶ່ງທີ່ສຳຄັນຂອງຄຸນທາດການເມືອງ; ມັນແມ່ນອາລົມຈິດ, ແມ່ນແບບແຜນການເຄື່ອນໄຫວເຮັດວຽກງານ ແບບແຜນການດຳລົງຊີວິດໃນສັງຄົມ ແລະ ໃນຄອບຄົວຂອງພະນັກງານ, ສະມາຊິກພັກ.

## 2. <u>ຄວາມຈຳເປັນໃນການຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ</u>.

ການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນທາດການເມືອງ, ມີຄຸນສົມບັດສິນທຳປະຕິວັດ ແມ່ນມີຄວາມສຳຄັນ ແລະ ຈຳເປັນສຳລັບພະນັກງານ, ສະມາຊິກພັກ ເພາະວ່າພະນັກງານ, ສະມາຊິກພັກເຖິງວ່າມີລະດັບຄວາມຮູ້, ຄວາມສາມາດສູງປານໃດກໍຕາມ, ແຕ່ຫາກຂາດຄຸນທາດການເມືອງ, ຂາດຄຸນສົມບັດສິນທຳປະຕິວັດແລ້ວ ກໍບໍ່ອາດນຳໃຊ້ໃຫ້ເປັນປະໂຫຍດສຳລັບພັກ, ປະເທດຊາດ ແລະ ປະຊາຊົນໄດ້.

ພະນັກງານ, ສະມາຊິກພັກ ຕ້ອງຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ຈຶ່ງຈະມີຄວາມກ້າວໜ້າ ແລະ ໄດ້ຮັບຄວາມໄວ້ວາງໃຈຈາກພັກ ແລະ ມະຫາຊົນຢ່າງກວ້າງຂວາງ; ກົງກັນຂ້າມຖ້າພະນັກງານ, ສະມາຊິກພັກ ເສື່ອມຖອຍຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ກໍຈະເກີດສິ່ງຫຍໍ້ທໍ້ຕ່າງໆຂຶ້ນຢູ່ໃນຖັນແຖວພະນັກງານ, ສະມາຊິກພັກ ເຊັ່ນ: ພະຍາດອາດຍາສິດ, ສໍ້ລາດບັງຫຼວງ... ສຸດທ້າຍ

ກໍຈະຖືກພັກ ແລະ ມະຫາຊົນປະຕິເສດ, ຕົກຫຼົ່ນອອກຈາກພັກ ແລະ ຈາກການຈັດຕັ້ງ. ສະນັ້ນ, ການຝຶກຝົນຫຼໍ່ຫຼອມຕົນເອງ ມີຄຸນທາດການເມືອງ, ມີຄຸນສົມບັດສິນທຳປະຕິວັດຢູ່ສະເໝີ ຈຶ່ງແມ່ນຄວາມຈຳເປັນພາວະວິໄສ ແລະ ຂາດບໍ່ໄດ້ສຳລັບພະນັກງານ, ສະມາຊິກພັກທຸກສະຫາຍ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ໄດ້ເນັ້ນໜັກວ່າ: **"ໃນເງື່ອນໄຂໃໝ່ນີ້, ພັກເຮົາຍິ່ງຈຳເປັນຕ້ອງມີພະນັກງານ, ສະມາຊິກພັກທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ມີທາດແທ້ຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ຊາດ, ຕໍ່ປະຊາຊົນດ້ວຍຄວາມບໍລິສຸດໃຈ, ມີແບບແຜນດຳລົງຊີວິດທີ່ສົດໃສ ແລະ ມີມານະຈິດຝຶກຝົນຫຼໍ່ຫຼອມຕົນເອງສະແຫວງຫາຄວາມຮູ້, ຄວາມກ້າວໜ້າຄົ້ນຄວ້າຮໍ່າຮຽນຍົກລະດັບໃນທຸກດ້ານ, ມີສະຕິຕໍ່ການຈັດຕັ້ງ, ລະບຽບວິໄນ, ເຄົາລົບກົດໝາຍ ແລະ ລະບຽບຂອງພັກຢ່າງເຂັ້ມງວດ".**

ໃນການຝຶກຝົນຫຼໍ່ຫຼອມຕົນເອງນັ້ນ, ພວກເຮົາຕ້ອງເຂົ້າໃຈເປັນເອກະພາບນຳກັນວ່າ ການຝຶກຝົນຫຼໍ່ຫຼອມເພື່ອຍົກສູງຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ ແມ່ນການຕໍ່ສູ້ລະຫວ່າງແນວຄິດ ແລະ ການກະທຳທີ່ກ້າວໜ້າກັບແນວຄິດ ແລະ ການກະທຳທີ່ຫຼ້າຫຼັງຢູ່ໃນກະໂຕພະນັກງານ, ສະມາຊິກພັກແຕ່ລະຄົນ, ຖ້າແນວຄິດກ້າວໜ້າຫາກເອົາຊະນະແນວຄິດຫຼ້າຫຼັງການປະຕິວັດເຮົາ ຈຶ່ງຈະກ້າວໜ້າຂະຫຍາຍຕົວໄປຕາມທິດທາງທີ່ພັກກຳນົດໄວ້, ກົງກັນຂ້າມຖ້າແນວຄິດຫຼ້າຫຼັງເອົາຊະນະແນວຄິດກ້າວໜ້າການປະຕິວັດເຮົາ ກໍຄືແນວທາງປ່ຽນແປງໃໝ່ຂອງພວກເຮົາ ຕ້ອງພົບຄວາມຫຍຸ້ງຍາກ

ຢ່າງຫຼີກລ່ຽງບໍ່ໄດ້ ເພາະວ່າພະນັກງານ, ສະມາຊິກພັກມີບົດບາດຕັດສິນຜົນໄດ້ຜົນເສຍ ໃນການຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ ກໍຄື ຕັດສິນຊາຕາກຳຂອງປະເທດຊາດ.

**II. <u>ເນື້ອໃນຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ</u>.**

**1. <u>ເນື້ອໃນຂອງຄຸນທາດການເມືອງ</u>.**

**1.1. ມີຄວາມເຊື່ອໝັ້ນຢ່າງຕາຍໃຈຕໍ່ອຸດົມການສັງຄົມນິຍົມ.**

ພະນັກງານ, ສະມາຊິກພັກ ຕ້ອງມີຄວາມເຊື່ອໝັ້ນຕໍ່ລັດທິສັງຄົມນິຍົມຢ່າງໜັກແໜ້ນ; ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ລະບອບປະຊາທິປະໄຕຢ່າງໜັກແໜ້ນ. ມີຄວາມຕື່ນຕົວເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າ, ມີມານະຈິດອົດທົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ມີນ້ຳໃຈເສຍສະຫຼະເພື່ອຄວາມຮັ່ງມີຜາສຸກຂອງປະຊາຊົນລາວບັນດາເຜົ່າ ກໍຄືເພື່ອຄວາມກ້າວໜ້າຂອງປະເທດຊາດ.

**1.2. ມີຫຼັກໝັ້ນມິດ-ສັດຕູອັນຈະແຈ້ງ.**

ຕ້ອງເດັດດ່ຽວໜຽວແໜ້ນ ຕໍ່ສູ້ກັບກົນອຸບາຍມ້າງເພທຳລາຍຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີໃນທຸກຮູບແບບ ເພື່ອປົກປັກຮັກສາປະເທດຊາດ ແລະ ຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ ຕ້ອງເປັນເຈົ້າການສະກັດກັ້ນການຫັນປ່ຽນດ້ວຍຕົນເອງຢູ່ພາຍໃນຂອງພວກເຮົາ, ມີຄວາມສະດຸ້ງໄວ ແລະ ມີສະຕິລະວັງຕົວສູງບໍ່ຫວັ່ນໄຫວຄອນແຄນຕໍ່ກົນອຸບາຍ, ເລລ່ຽມ ແລະການເຄື່ອນໄຫວຫັນປ່ຽນໂດຍສັນຕິຂອງສັດຕູ; ຮູ້ປຸກລະດົມຈັດຕັ້ງ

ນຳພາ, ໝູນໃຊ້ຮູບແບບ ແລະ ວິທີການຕໍ່ສູ້ທີ່ສອດຄ່ອງເໝາະສົມ ເພື່ອຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງປະເທດຊາດ.

**1.3. ມີຄວາມຮູ້ຢ່າງເລິກເຊິ່ງກ່ຽວກັບລັດທິມາກ-ເລນິນ ແລະ ແນວທາງແຜນນະໂຍບາຍຂອງພັກ.**

ຕ້ອງຕັ້ງໜ້າຄົ້ນຄວ້າຮໍ່າຮຽນທິດສະດີມາກ-ເລນິນ, ຄົ້ນຄວ້າເຊື່ອມຊຶມ ແລະ ກຳແໜ້ນແນວທາງແຜນນະໂຍບາຍຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດໃຫ້ເລິກເຊິ່ງ; ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກມາເປັນແຜນການ ແລະ ໂຄງການວຽກງານລະອຽດຂອງຄະນະພັກ, ຂອງຂະແໜງການ ແລະທ້ອງຖິ່ນຕົນ; ຮູ້ໂຄສະນາປຸກລະດົມ ແລະ ຈັດຕັ້ງນຳພາຂະບວນການປະຕິວັດດ້ວຍຈິດໃຈຮັກຊາດອັນແທ້ຈິງ, ເສີມຂະຫຍາຍຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອນຳເອົາຄວາມຮັ່ງມີຜາສຸກມາໃຫ້ປະເທດຊາດ ແລະ ປະຊາຊົນ; ຕ້ອງກຳແໜ້ນແນວທາງການຕ່າງປະເທດ ແລະ ທິດທາງຫຼັກການດ້ານການເປີດກວ້າງການພົວພັນຮ່ວມມື, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຂອງພັກ, ຮູ້ຍາດແຍ່ງ, ກຳແໜ້ນກາລະໂອກາດເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີບາດກ້າວຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

**1.4. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ ທີ່ໄດ້ຮັບການມອບໝາຍ.**

ຕ້ອງຍົກສູງຄວາມຮັບຜິດຊອບການເມືອງ, ມີຄວາມຫ້າວ

ທັນເປັນເຈົ້າການປະຕິບັດວຽກງານດ້ວຍຄວາມປະດິດສ້າງ, ມີຄວາມກ້າຫານຮັບຜິດຊອບຕໍ່ຜົນໄດ້ຜົນເສຍ ໃນການປະຕິບັດໜ້າທີ່ວຽກງານ; ບໍ່ເລືອກວຽກ ການຈັດຕັ້ງມອບໝາຍວຽກຫຍັງໃຫ້ກໍຕ້ອງຕັດສິນໃຈເຮັດໃຫ້ສຳເລັດ ແລະ ເຮັດວຽກມີປະສິດທິຜົນ.

**1.5. ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ກຳລັງແຮງ ແລະ ສະຕິປັນຍາຂອງມະຫາຊົນ.**

ຕ້ອງຮູ້ປຸກລະດົມຂົນຂວາຍ ແລະ ເສີມຂະຫຍາຍກຳລັງແຮງສັງລວມຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ແລະ ບັນດາພາກສ່ວນເສດຖະກິດ; ຮູ້ຂຸດຄົ້ນ ແລະ ນຳໃຊ້ທ່າແຮງກັບທີ່ ທັງທ່າແຮງດ້ານຊັບພະຍາກອນທຳມະຊາດ ແລະ ທ່າແຮງດ້ານກຳລັງຄົນເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ການພັດທະນາປະເທດຊາດ ເພື່ອບັນລຸອຸດົມການທີ່ພັກເຮົາກຳນົດໄວ້.

**1.6. ເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ.**

ພະນັກງານ, ສະມາຊິກພັກ ຈະຢູ່ໃນຖານະຕຳແໜ່ງໃດກໍຕາມຕ້ອງໄດ້ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ເປັນການນຳຂັ້ນສູງເທົ່າໃດຍິ່ງຕ້ອງເປັນແບບຢ່າງໃນການເຄົາລົບລະບຽບກົດໝາຍ, ບໍ່ເຮັດໃນສິ່ງທີ່ລະເມີດລະບຽບກົດໝາຍ. ພະນັກງານ, ສະມາຊິກພັກ ຕ້ອງເອົາໃຈໃສ່ໃນການປົກປັກຮັກສາ ແລະ ທະນຸບຳລຸງຄວາມສາມັກຄີເປັນເອກະພາບພາຍໃນພັກ, ຕ້ອງສຶກສາອົບຮົມຄອບຄົວ ແລະ ຍາດພີ່ນ້ອງບໍ່ໃຫ້ກະທຳໃນສິ່ງທີ່ບໍ່ຖືກຕ້ອງ ຫຼື ຜິດລະບຽບກົດໝາຍ.

## 2. ເນື້ອໃນຂອງຄຸນສົມບັດສິນທຳປະຕິວັດ.

### 2.1. ມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ.

ການມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອສ່ວນລວມເນື້ອແທ້ກໍແມ່ນການສະແດງອອກຂອງໜ້າທີ່ການເມືອງ ອັນເປັນພື້ນຖານກວ່າໝູ່ ຂອງຄຸນທາດການເມືອງ ເປັນຕົ້ນແມ່ນຄວາມອົດທົນສູ້ຊົນເພື່ອເຮັດໃຫ້ແນວທາງນະໂຍບາຍ ແລະ ອຸດົມຄະຕິຂອງພັກເປັນຈິງເທື່ອລະກ້າວຄື: ເຮັດໃຫ້ປະຊາຊົນຮັ່ງມີຜາສຸກ, ປະເທດຊາດ ມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ; ການເສຍສະຫຼະເພື່ອປະເທດຊາດ, ເພື່ອປະຊາຊົນໝາຍເຖິງການທຸ້ມເທສະຕິປັນຍາ ແລະ ກຳລັງວັງຊາຂອງຕົນເພື່ອຮັບໃຊ້ຊາດ ແລະ ປະຊາຊົນ ກໍຄືຮັບໃຊ້ພາລະກິດຕໍ່ສູ້ປະຕິວັດ ໂດຍບໍ່ເລືອກວຽກ, ບໍ່ລັງເລທໍ້ຖອຍຕໍ່ຄວາມຫຍຸ້ງຍາກໃດໆ; ພະນັກງານ, ສະມາຊິກພັກ ໂດຍສະເພາະແມ່ນພະນັກງານການນຳແຕ່ລະຂັ້ນ ຍິ່ງມີຖານະຕຳແໜ່ງ ແລະ ມີຄວາມຮັບຜິດຊອບສູງເທົ່າໃດ ຍິ່ງຕ້ອງມີຄວາມເສຍສະຫຼະສູງເທົ່ານັ້ນ; ການເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ ຕ້ອງສະແດງອອກໃນການກະທຳ ແຕ່ບໍ່ແມ່ນໃນຄຳເວົ້າຊື່ໆ ເປັນຕົ້ນແມ່ນການເສຍສະຫຼະເວລາ, ເສຍສະຫຼະເລືອດເນື້ອເຫື່ອແຮງ ແລະ ສະຕິປັນຍາ, ເສຍສະຫຼະຄວາມສຸກສ່ວນຕົວ ເພື່ອປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ສູ້ຊົນເຮັດຫຼ້ອນໜ້າທີ່ໂດຍບໍ່ຮຽກຮ້ອງ, ເລັ່ງທວງເອົາຜົນປະໂຫຍດໃດໆໃຫ້ຕົນ ນອກເໜືອຈາກນະໂຍບາຍລວມຂອງພັກ, ຂອງລັດໄດ້ກຳນົດໄວ້.

## 2.2. ມີຄວາມດຸໝັ່ນ, ພາກພຽນ, ສັດຊື່, ປະຢັດ ແລະ ປອດໃສ.

ເປັນພະນັກງານ, ສະມາຊິກພັກ ໂດຍສະເພາະຜູ້ທີ່ເປັນຫຼັກແຫຼ່ງນຳພາ, ຄຸ້ມຄອງ ຕ້ອງດຸໝັ່ນ, ປະຢັດ, ສັດຊື່ ແລະ ມີຄວາມປອດໃສເປັນແບບຢ່າງທີ່ດີ ເພື່ອໃຫ້ຂັ້ນລຸ່ມ ແລະ ຜູ້ອື່ນໆໄດ້ຮຽນນຳ, ເພາະວ່າ **"ຄວາມເປັນແບບຢ່າງທີ່ດີ ແມ່ນການນຳພາທີ່ດີ"** ຫາກຂາດຄວາມເປັນແບບຢ່າງທີ່ດີມະຫາຊົນກໍບໍ່ນັບຖື ແລະ ຂາດຄວາມເຊື່ອໝັ້ນ ຊຶ່ງສິ່ງຜົນສະທ້ອນທາງລົບຕໍ່ພາບພົດບົດບາດການນຳພາຂອງພັກ. ຄວາມເປັນແບບຢ່າງທີ່ດີ ຕ້ອງສະແດງອອກທັງຄຳເວົ້າ ແລະ ການກະທຳ.

- **ດຸໝັ່ນ** ແມ່ນເຮັດວຽກດ້ວຍຄວາມຕັ້ງໜ້າບຸກບືນ, ຕື່ນຕົວເປັນເຈົ້າການ; ຫາກບໍ່ແມ່ນໃຫ້ຜູ້ອື່ນມາບອກ, ມາສັ່ງຈຶ່ງເຮັດ; ວຽກຍາກ ຫຼື ວຽກງ່າຍ ຕ້ອງອົດທົນເຮັດໃຫ້ສຳເລັດມີປະສິດທິຜົນ; ເຮັດໃຫ້ດີທີ່ສຸດ, ເຮັດໃຫ້ໄວ, ເຮັດໃຫ້ຖືກກົດໝາຍ ແລະ ມີຄວາມຮັບຜິດຊອບສູງ.

- **ພາກພຽນ** ແມ່ນເຮັດດ້ວຍຄວາມມານະ, ອົດທົນໂດຍມີການຄົ້ນຄິດໝູນໃຊ້ຄວາມຮູ້, ຄວາມສາມາດ ເຂົ້າໃນວຽກງານໃຫ້ເກີດປະໂຫຍດສູງສຸດ, ເຮັດວຽກມີແຜນການ, ມີການຕິດຕາມກວດກາເຫັນອັນດີປັດໄຈໃໝ່ ກໍເອົາໃຈໃສ່ເສີມຂະຫຍາຍ, ເຫັນຈຸດອ່ອນ, ຂໍ້ຄົງຄ້າງກໍພະຍາຍາມປັບປຸງແກ້ໄຂໃຫ້ດີຂຶ້ນ.

- **ປະຢັດ** ແມ່ນການຮູ້ຈັກໃຊ້, ຮູ້ຈັກຈ່າຍຢ່າງສົມເຫດ, ສົມຜົນ ແລະ ເປັນປະໂຫຍດ, ບໍ່ຫຼິ້ນກິນຟຸມເຟືອຍ, ເສລີຊະຊາຍ, ຮູ້

ຈັກປົກປັກຮັກສາບົວລະບັດສິ່ງຂອງສ່ວນຕົວ, ສ່ວນລວມ ເພື່ອໃຫ້ໃຊ້ໄດ້ດົນ; ປະຢັດຍັງໝາຍເຖິງການໃຊ້ຖືກກັບເປົ້າໝາຍ, ຖືກກັບຈຸດປະສົງ ແລະ ໃຊ້ໃຫ້ເກີດປະໂຫຍດແກ່ສ່ວນລວມຫຼາຍເທົ່າທີ່ຈະຫຼາຍໄດ້; ປະຢັດແມ່ນການບໍ່ຟຸມເຟືອຍ, ບໍ່ໃຊ້ຈ່າຍເກີນຖານະຕໍາແໜ່ງ ແລະ ຖານະການເງິນຂອງຕົນ.

**- ສັດຊື່** ແມ່ນການກະທໍາທີ່ສອດຄ່ອງກັບຄໍາເວົ້າບໍ່ຕົວະ, ບໍ່ສໍ້ໂກງ; ບໍ່ສວຍໂອກາດຊອກຊ່ອງຫວ່າງ ແລະ ວິທີການເພື່ອລັກໂລບ, ຍັກຍອກເອົາຊັບສິນສິ່ງຂອງການຈັດຕັ້ງພັກ-ລັດ ແລະ ຂອງຜູ້ອື່ນມາເປັນຂອງຕົນເອງ.

**- ປອດໃສ** ແມ່ນໝາຍເຖິງຈິດໃຈ ແລະ ການກະທໍາທີ່ໃສສະອາດ, ບໍລິສຸດຈິງໃຈຕໍ່ການຈັດຕັ້ງ ແລະ ຄອບຄົວ; ປອດໃສຍັງໝາຍເຖິງການກະທໍາທີ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**2.3. ມີລະບຽບວິໄນ ແລະ ເຄົາລົບກົດໝາຍ.**

ພະນັກງານ, ສະມາຊິກພັກ ຍິ່ງເປັນພະນັກງານການນໍາສູງເທົ່າໃດຍິ່ງຕ້ອງເປັນຜູ້ນໍາໜ້າໃນການຮຽນຮູ້ກ່ຽວກັບກົດໝາຍ, ເຄົາລົບນັບຖືກົດໝາຍ, ປະຕິບັດ ແລະ ນໍາໃຊ້ກົດໝາຍຢ່າງເຂັ້ມງວດ, ບໍ່ສວຍໃຊ້ ຫຼື ລະເມີດກົດໝາຍ, ກົດລະບຽບຕ່າງໆ ເພື່ອໃຫ້ຕົນເອງມີຄວາມສະດວກ, ມີຜົນປະໂຫຍດອັນຈະພາໃຫ້ປະຊາຊົນຂາດຄວາມເຊື່ອຖື.

- ການມີລະບຽບວິໄນ ແລະ ເຄົາລົບກົດໝາຍ ຍັງຕ້ອງສະແດງອອກໃນການເຄົາລົບສິດເສລີພາບຂອງພົນລະເມືອງ, ເປັນເຈົ້າ

ການປະກອບສ່ວນປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ, ປະກອບສ່ວນເຂົ້າໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພໃນສັງຄົມ.

**2.4. ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່.**

ຄວາມສາມັກຄີເອື້ອເຟື້ອເພື່ອແຜ່ ສະແດງອອກຂອງຄວາມເຄົາລົບນັບຖືເຊິ່ງກັນ ແລະ ກັນ, ຮັກແພງກັນ, ເຊື່ອໝັ້ນກັນ, ເຮັດວຽກນຳກັນ ດ້ວຍຄວາມເຂົ້າໃຈກັນ ແລະ ຊ່ວຍເຫຼືອກັນໃຫ້ມີຜົນສຳເລັດ, ມີຈິດໃຈເສຍສະຫຼະ ເພື່ອຜູ້ອື່ນດ້ວຍຄວາມບໍລິສຸດໃຈ, ບໍ່ຢ້ານລື້ນຢ້ານເຫຼືອ ແລະ ບໍ່ມີອະຄະຕິອິດສາບັງບຽດກັນ.

**2.5. ມີຈິດໃຈຮັກຊາດອັນດູດດື່ມ.**

ແມ່ນການສະແດງອອກເຖິງລັດທິຮັກຊາດ, ແມ່ນຄວາມພາກພູມໃຈຕໍ່ຊາດ, ມີຄວາມເອກອ້າງທະນົງໃຈເປັນຄົນລາວ, ຄົນລາວມີຈິດໃຈອົງອາດກ້າຫານ, ຊາດລາວວິລະຊົນບໍ່ເຄີຍຍອມຈຳນົນໃຫ້ຊາດອື່ນເຂົ້າມາຄອບຄອງ, ມີເອກະລັກ, ມີຮີດຄອງປະເພນີອັນດີງາມ, ອັນໃດແມ່ນຂອງຄົນລາວເຮັດ, ອັນໃດແມ່ນຜະລິດຕະພັນທີ່ດີງາມຈາກສະຕິປັນຍາ, ເຫື່ອແຮງ ແລະ ທຶນຮອນຂອງຄົນລາວໃນຊາດຕ້ອງຕັ້ງໜ້າປົກປັກຮັກສາ ແລະ ສົ່ງເສີມ; ອັນໃດແມ່ນຜົນສຳເລັດ, ອັນໃດແມ່ນໄຊຊະນະທີ່ຄົນລາວຍາດມາໄດ້ ກໍຕ້ອງມີຄວາມພາກພູມໃຈ, ເອກອ້າງ, ຍ້ອງຍໍສັນລະເສີນ, ນ້ຳໃຈຮັກຊາດຍັງສະແດງອອກ ໃນການເປັນເຈົ້າການເຜີຍແຜ່ສິ່ງທີ່ດີງາມຂອງຊາດລາວຕໍ່ຕ່າງປະເທດ; ເອົາໃຈໃສ່ໃນການຄົ້ນຄວ້າປະດິດສ້າງ ເພື່ອຜະລິດວັດຖຸສິ່ງຂອງທີ່ມີຄຸນນະພາບ, ວິຈິດສວຍງາມເພື່ອສະແດງໃຫ້ຕ່າງ

ຊາດເຫັນ. ພ້ອມກັນນັ້ນ ກໍສະແດງອອກໃນການມີຈິດໃຈຮ່ວມມື, ແຂ່ງຂັນກັບຊາດອື່ນເພື່ອກຽດສັກສີ ແລະ ຊື່ສຽງຂອງຊາດຕົນ.

**2.6. ມີຄວາມສຸພາບຮຽບຮ້ອຍ ແລະ ເຮັດແທ້ທຳຈິງ.**

ເປັນພະນັກງານ, ສະມາຊິກພັກ ນອກຈາກມີຈັນຍາບັນ ແລະ ມີລະບຽບວິໄນແລ້ວ ຍັງຕ້ອງມີຄວາມສຸພາບຮຽບຮ້ອຍ, ສະຫງ່ຽມ ຄ່ຽມຄົມ, ບໍ່ອວດອົ່ງທະນົງຕົວ, ບໍ່ດູຖູກໝິ່ນປະໝາດຜູ້ອື່ນ; ພະນັກງານ, ສະມາຊິກພັກ ຢາກໄດ້ຮັບກຽດ, ຢາກໄດ້ການເຄົາລົບນັບຖືຈາກຜູ້ອື່ນ ກໍຕ້ອງມີທັດສະນະ ແລະ ການກະທຳໃຫ້ກຽດແກ່ຜູ້ອື່ນ, ເຄົາລົບນັບຖືເພື່ອນຮ່ວມງານ ແລະ ປະຊາຊົນ; ຕ້ອງເປັນຄົນເຮັດແທ້ທຳຈິງ, ເວົ້າຕ້ອງໄປຄຽງຄູ່ກັບເຮັດ "ເວົ້າແລ້ວຕ້ອງເຮັດເປັນ"; ເວົ້າແນວໃດ ກໍຕ້ອງເຮັດແນວນັ້ນ ແລະ ຕ້ອງເຮັດໃຫ້ດີທີ່ສຸດ, ບໍ່ອະນຸຍາດໃຫ້ເວົ້າແບບໜຶ່ງ ແລ້ວໄປເຮັດອີກແບບໜຶ່ງ, ບໍ່ດັ່ງນັ້ນ ກໍຈະຂາດຄວາມເປັນແບບຢ່າງ, ຂາດລັກສະນະນຳໜ້າ ແລະ ຂາດຄວາມເຫຼື້ອມໃສສັດທາຈາກປະຊາຊົນ.

**2.7. ບຸກບືນຮຽນຮູ້ ແລະ ພັດທະນາຕົນເອງ.**

ພະນັກງານ, ສະມາຊິກພັກ ຕ້ອງສະແຫວງຫາ ແລະ ບຸກບືນຄົ້ນຄວ້າຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນໃນທຸກດ້ານ ເຊັ່ນ: ຮຽນຮູ້ດ້ວຍຕົນເອງ, ຮຽນຮູ້ນຳໝູ່ຄູ່ເພື່ອນສະຫາຍ, ຮຽນຮູ້ຕາມຫຼັກຕຳລາ, ຮຽນຮູ້ນຳວຽກງານຕົວຈິງ, ຮຽນຮູ້ນຳຂະບວນການມະຫາຊົນ. ການຮຽນຮູ້ບໍ່ມີວັນສິ້ນສຸດ ທ່ານເລນິນເວົ້າວ່າ: **"ຮຽນແລ້ວ, ຮຽນອີກຮຽນເລື້ອຍໆໄປ"**. ຈຶ່ງສາມາດພັດທະນາຕົນເອງປະກອບສ່ວນພັດທະນາປະເທດຊາດໃຫ້ມັ່ງຄັ່ງເຂັ້ມແຂງໄດ້.

## III. ວິທີການຝຶກຝົນຫຼໍ່ຫຼອມຄຸນສົມບັດສົມທຳປະຕິວັດ.

**1.** ດຸໝັ່ນຄົ້ນຄວ້າຮ່ຳຮຽນລັດທິມາກ-ເລນິນ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ; ເອົາໃຈໃສ່ຮ່ຳຮຽນຍົກລະດັບຄວາມຮູ້ດ້ານຕ່າງໆໃຫ້ນັບມື້ສູງຂຶ້ນ.

**2.** ຕັ້ງໜ້າເຂົ້າຮ່ວມຊີວິດພາຍໃນພັກປົກກະຕິ ແລະ ເຂັ້ມງວດ ເພື່ອຊອກໃຫ້ເຫັນດ້ານຕັ້ງໜ້າແນໃສ່ເສີມຂະຫຍາຍ, ພ້ອມກັນນັ້ນຕ້ອງຊອກໃຫ້ເຫັນຈຸດອ່ອນ, ຂໍ້ຄົງຄ້າງເພື່ອປັບປຸງແກ້ໄຂຢ່າງເດັດຂາດ ແລະ ທັນການ.

**3.** ເອົາໃຈໃສ່ປັບປຸງທັດສະນະມະຫາຊົນໃຫ້ໜັກແໜ້ນ, ຕັ້ງໜ້າເຂົ້າຮ່ວມຂະບວນການຂອງມະຫາຊົນ ໂດຍຖືເອົາຂະບວນການຂອງມະຫາຊົນເປັນບ່ອນຝຶກຝົນຫຼໍ່ຫຼອມຕົນເອງ ແລະ ຖືເອົາມະຫາຊົນເປັນຜູ້ສ້າງພັກ.

**4.** ເອົາໃຈໃສ່ປັບປຸງທັດສະນະຫຼັກໝັ້ນມະຫາຊົນໃຫ້ໜັກແໜ້ນ ແລະ ຍົກສູງສະຕິລະວັງຕົວຕໍ່ກົນອຸບາຍຂອງສັດຕູຢູ່ສະເໝີເພື່ອບໍ່ໃຫ້ມີຊ່ອງຫວ່າງໃຫ້ສັດຕູສວຍໃຊ້ ເພື່ອມ້າງເພທຳລາຍພວກເຮົາ.

**5.** ເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ; ກໍ່ສ້າງອຳນາດການປົກຄອງໃຫ້ເຂັ້ມແຂງ.

**6.** ບັນຫາທີ່ເປັນພື້ນຖານກວ່າໝູ່ແມ່ນພະນັກງານ, ສະມາຊິກພັກທຸກສະຫາຍ ຕ້ອງມີຄວາມຕັດສິນໃຈສູງໃນການຝຶກຝົນຫຼໍ່ຫຼອມຕົນເອງ ໂດຍເລີ່ມຈາກການຍົກສູງຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ ແລະ ເຂັ້ມງວດຕໍ່ຕົນເອງ, ກ້າຫານທັນ

ປ່ຽນດ້ວຍຕົນເອງ, ຍິນດີຮັບເອົາຄໍາຕິຊົມຈາກຄົນອື່ນດ້ວຍຄວາມຈິງໃຈ ແລະ ເອົາໃຈໃສ່ຕ້ານລັດທິເອກະຊົນ, ແນວຄິດຂີ້ຄ້ານມັກງ່າຍ, ແນວຄິດຄັບແຄບ, ອວດອົ່ງທະນົງຕົວ.

# ບົດທີ 4
# ເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ

**I. ຄວາມສຳນຶກ ແລະ ຄວາມຈຳເປັນໃນການເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ.**

**1. ຄວາມສຳນຶກກ່ຽວກັບຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ.**

- ລັກສະນະນຳໜ້າ ແລະ ຄວາມເປັນແບບຢ່າງຂອງສະມາຊິກພັກ ແມ່ນພື້ນຖານທີ່ດີໃຫ້ແກ່ການນຳພາຂອງພັກ. ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດເປັນຕົ້ນມາຍາມໃດກໍຖືເອົາການນຳພາ ດ້ວຍຄວາມເປັນແບບຢ່າງຂອງສະມາຊິກພັກ ແມ່ນໜຶ່ງໃນບັນດາບົດບາດ ແລະ ວິທີນຳພາຂອງພັກ; ພັກເຮົາໄດ້ໃຫ້ທັດສະນະວ່າ ການນຳພາທີ່ດີ ແມ່ນການນຳພາຜ່ານຄວາມເປັນແບບຢ່າງຂອງສະມາຊິກພັກ.

**2. ຄວາມຈຳເປັນໃນການເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ.**

- ສະມາຊິກພັກ ແມ່ນຜູ້ເປັນຫຼັກແຫຼ່ງ (ແກ່ນສານ) ຢູ່ທຸກຂົງເຂດວຽກງານ; ເປັນຜູ້ທີ່ມີບົດບາດສຳຄັນໃນການກຳນົດ ແລະ ຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍຂອງພັກ, ນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ; ສະມາຊິກພັກ ໂດຍສະເພາະແມ່ນຜູ້ທີ່ມີບົດບາດອິດທິພົນສູງເທົ່າໃດ ຍິ່ງເປັນເປົ້າສາຍຕາຂອງມະຫາຊົນ. ສະນັ້ນ, ຄວາມເປັນແບບຢ່າງທີ່ດີຂອງສະມາຊິກພັກ ຈຶ່ງເປັນແວ່ນ

ແຍງອັນໃສແຈ້ງ ແລະ ເປັນແຮງດຶງດູດເອົາຄວາມເຊື່ອໝັ້ນຂອງມະຫາຊົນໄດ້ຢ່າງກວ້າງຂວາງ.

- ການເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ ແມ່ນຄວາມຈຳເປັນພາວະວິໄສແຫ່ງການນຳພາຂອງພັກ ແລະ ການນຳພາໂດຍຜ່ານຄວາມເປັນແບບຢ່າງທີ່ດີຂອງສະມາຊິກພັກ ແມ່ນມູນເຊື້ອຂອງພັກ ຊຶ່ງສະມາຊິກພັກທຸກສະຫາຍຕ້ອງອອກແຮງຝຶກຝົນ ແລະ ເສີມຂະຫຍາຍ; ບໍ່ດັ່ງນັ້ນ ພັກເຮົາກໍຈະເສຍບົດບາດໃນການນຳພາ ແລະ ໃນທີ່ສຸດກໍຈະຖືກມະຫາຊົນປະຕິເສດພັກ.

- ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ຂຽນວ່າ: "ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນວິທີເຮັດວຽກ, ນ້ຳໃຈຮັບໃຊ້ຊາດ ແລະ ຄວາມເສຍສະຫຼະເພື່ອສ່ວນລວມ ຂອງສະມາຊິກພັກ, ພະນັກງານ ຈຳນວນບໍ່ໜ້ອຍໄດ້ມີການເຊື່ອມຖອຍ, ພະຍາດອາດຍາສິດ, ຫ່າງເຫີນຈາກມະຫາຊົນ, ການສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດສ່ວນຕົວຂອງພະນັກງານ, ສະມາຊິກພັກຍັງປະກົດໃຫ້ເຫັນຢູ່ຫຼາຍຂັ້ນ, ການສໍ້ລາດບັງຫຼວງຍັງມີລັກສະນະແຜ່ລາມທົ່ວໄປ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເຂັ້ມງວດເດັດຂາດ. ສິ່ງເຫຼົ່ານັ້ນພວມເປັນບັນຫາທ້າທາຍ ຕໍ່ບົດບາດອິດທິພົນຂອງພັກເຮົາເສື່ອມເສຍ ຊຶ່ງເລັ່ງທວງໃຫ້ພວກເຮົາຕ້ອງມີຄວາມເດັດດ່ຽວໃນການແກ້ໄຂ ດ້ວຍການເຊີດຊູຄວາມເປັນແບບຢ່າງນຳໜ້າທີ່ດີຂອງສະມາຊິກພັກ ເພື່ອປົກປັກຮັກສາບົດບາດອິດທິພົນຂອງພັກ.

- ສະມາຊິກພັກທຸກສະຫາຍ ຕ້ອງມີຄວາມຫ້າວຫັນຕື່ນຕົວ

ເປັນເຈົ້າການ ໃນການຝຶກຝົນຫຼໍ່ຫຼອມຕົນເອງ, ເປັນແບບຢ່າງທີ່ດີໃຫ້ແກ່ມະຫາຊົນ, ນຳໜ້າພາທາງມະຫາຊົນໃນການພັດທະນາຕົນເອງ ກໍຄື ປະຕິບັດໜ້າທີ່ວຽກງານ ທີ່ການຈັດຕັ້ງມອບໝາຍໃຫ້.

- ໃນການພັດທະນາຕົນເອງ ແລະ ການປະຕິບັດໜ້າທີ່ວຽກງານຈະເປັນວຽກໃຫຍ່, ວຽກນ້ອຍ, ສະມາຊິກພັກຕ້ອງໄປກ່ອນ, ເຮັດກ່ອນ, ເປັນແບບຢ່າງເຮັດຢ່າງຫ້າວຫັນ, ໜັກເອົາ, ເບົາສູ້ ແລະເຮັດແທ້ທຳຈິງເຮັດໃຫ້ດີກວ່າມະຫາຊົນ.

## II. <u>ເນື້ອໃນການເຊີດຊູຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ.</u>

### 1. <u>ເປັນແບບຢ່າງນຳໜ້າໃນການຄົ້ນຄວ້າຮ່ຳຮຽນສະແຫວງຫາຄວາມກ້າວໜ້າ ແລະ ພັດທະນາຕົນເອງຢ່າງບໍ່ຢຸດຢັ້ງ</u>.

- ສະມາຊິກພັກທຸກສະຫາຍ ຕ້ອງນຳໜ້າພາທາງມະຫາຊົນໃນການຄົ້ນຄວ້າຮ່ຳຮຽນ ຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນໃນທຸກດ້ານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານທີ່ນັບມື້ນັບຫຼາຍຂຶ້ນ ໂດຍສະເພາະແມ່ນຄວາມຮູ້ກ່ຽວກັບລັດທິມາກ-ເລນິນ, ແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ຄວາມຮູ້, ຄວາມຊຳນິຊຳນານດ້ານວິຊາສະເພາະ.

### 2. <u>ເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຄວາມຮັບຜິດຊອບສູງ</u>.

- ສະມາຊິກພັກ ຈະຢູ່ໃນຖານະຕຳແໜ່ງໃດກໍຕາມ ເມື່ອໄດ້ຮັບມອບໝາຍວຽກງານຈາກການຈັດຕັ້ງ ເຖິງວ່າຈະເປັນວຽກໃຫຍ່,

ວຽກນ້ອຍ, ວຽກຫຍຸ້ງຍາກສັບສົນປານໃດກໍຕາມ ຕ້ອງຍິນດີຮັບເອົາດ້ວຍຄວາມຈິງໃຈ; ພ້ອມກັນນັ້ນ ກໍຕ້ອງຕັ້ງໜ້າປະຕິບັດດ້ວຍຈິດໃຈກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ, ບໍ່ໂຍນຄວາມຮັບຜິດຊອບຖິ້ມພຸ້ນຖິ້ມພີ້, ອັນໃດຖືກກໍຍິນດີຮັບເອົາ, ອັນໃດຜິດກໍຍິນດີຮັບເອົາພ້ອມທັງຊອກຫາສາເຫດ ແລະ ວິທີປັບປຸງແກ້ໄຂໃຫ້ທັນການ.

**3. <u>ເປັນແບບຢ່າງນຳໜ້າ ດ້ານມານະຈິດອົດທົນຜ່ານຜ່າອຸປະສັກ ແລະ ຂໍ້ຫຍຸ້ງຍາກຕ່າງໆໃນການດຳລົງຊີວິດ</u>.**

- ການນຳພາ ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດພວກເຮົາໄປສູ່ຈຸດໝາຍທີ່ກຳນົດໄວ້ເວົ້າລວມ, ການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຂອງສະມາຊິກພັກ ເວົ້າສະເພາະ ຍັງຈະສືບຕໍ່ມີທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ. ສະນັ້ນ, ເປັນສະມາຊິກພັກຈະຕົກຢູ່ໃນສະພາບການໃດໆກໍຕາມ ຕ້ອງເປັນແບບຢ່າງດ້ານມານະຈິດ, ມີຄວາມເດັດດ່ຽວໝຽວແໜ້ນ, ບໍ່ທໍ້ຖອຍຕໍ່ອຸປະສັກໃດໆ; ສະມາຊິກພັກທຸກສະຫາຍຕ້ອງຍຶດຖືຄະຕິເຕືອນໃຈຢູ່ສະເໝີວ່າ: **"ໜັກຕ້ອງເອົາ, ເບົາຕ້ອງສູ້ ແລະ ຜ່ານຜ່າຂໍ້ຫຍຸ້ງຍາກ ຈຶ່ງຈະເຮັດໃຫ້ຕົນເອງເຂັ້ມແຂງ".**

**4. <u>ເປັນແບບຢ່າງນຳໜ້າໃນການອຸທິດຕົນເພື່ອຜົນປະໂຫຍດຂອງຊາດ ແລະ ເພື່ອຄວາມຮັ່ງມີ-ຜາສຸກຂອງປະຊາຊົນ</u>.**

- ສະມາຊິກພັກ ຕ້ອງເປັນແບບຢ່າງນຳໜ້າໃນຄວາມຫ້າວຫັນເປັນເຈົ້າການອຸທິດເຫື່ອແຮງ ແລະ ສະຕິປັນຍາຂອງຕົນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ນັບມື້ມີຄວາມຈະເລີນກ້າວໜ້າ ແລະ ມີຄວາມເປັນຫ່ວງເປັນໄຍນຳ

ຄວາມສຸກ-ທຸກຂອງປະຊາຊົນ; ໃນການປະຕິບັດໜ້າທີ່ວຽກງານ ຍາມໃດກໍຕ້ອງຖືເອົາປະຊາຊົນເປັນກົກ, ເປັນຈຸດປະສົງ, ເປັນເປົ້າໝາຍໃນການຮັບໃຊ້ຂອງຕົນ ແລະ ຕ້ອງເຮັດທຸກສິ່ງຢ່າງເພື່ອນໍາເອົາຄວາມຢູ່ດີ, ກິນດີມາໃຫ້ປະຊາຊົນ ແລະ ນໍາເອົາຄວາມໝັ້ງຄັ່ງເຂັ້ມແຂງມາໃຫ້ປະເທດຊາດ.

**5. <u>ເປັນແບບຢ່າງນໍາໜ້າ ໃນການດໍາລົງຊີວິດທີ່ປອດໃສ, ດຸໝັ່ນຂະຫຍັນພຽນ, ປະຢັດ, ສັດຊື່, ສາມັກຄີເອື້ອເຟື້ອເພື່ອແຜ່ ແລະ ເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ</u>.**

- ສະມາຊິກພັກ ຕ້ອງເປັນແບບຢ່າງນໍາໜ້າທີ່ດີໃນການດໍາລົງຊີວິດ ກໍຄື ທໍາມາຫາກິນ (ສ້າງຄວາມຮັ່ງມີໃຫ້ແກ່ຄອບຄົວ) ດ້ວຍຄວາມບໍລິສຸດປອດໃສ (ສ້າງຄວາມຮັ່ງມີທີ່ຖືກຕ້ອງຕາມກົດໝາຍ).

- ສະມາຊິກພັກ ຕ້ອງເປັນຜູ້ນໍາໜ້າທີ່ດີໃນການປະກອບອາຊີບ ກໍຄືປະຕິບັດວຽກງານດ້ວຍຈິດໃຈດຸໝັ່ນຂະຫຍັນພຽນ, ປະຢັດ, ສັດຊື່ ມີຄວາມສາມັກຄີຮັກແພງ, ຊ່ວຍເຫຼືອຜູ້ອື່ນທີ່ມີຄວາມຫຍຸ້ງຍາກກວ່າ ເພື່ອພ້ອມກັນກ້າວໜ້າ.

- ສະມາຊິກພັກ ຕ້ອງເປັນແບບຢ່າງນໍາໜ້າໃນການເສຍສະຫຼະຜົນປະໂຫຍດສ່ວນຕົວ ເພື່ອຜົນປະໂຫຍດສ່ວນລວມ ແລະ ຍາມໃດກໍຖືເອົາຜົນປະໂຫຍດສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ.

**6. <u>ເປັນແບບຢ່າງໃນການແກ້ໄຂຂໍ້ບົກຜ່ອງຂອງຕົນເອງ</u>.**

- ສະມາຊິກພັກ ມີບົດບາດສໍາຄັນໃນການຄົ້ນຄວ້າ ແລະ ກໍານົດແນວທາງຂອງພັກ, ລະບຽບກົດໝາຍຂອງລັດ. ສະນັ້ນ, ສະມາຊິກພັກຕ້ອງເປັນແບບຢ່າງ ໃນການຈັດຕັ້ງປະຕິບັດແນວທາງ

ແຜນນະໂຍບາຍຂອງພັກ ທີ່ວາງອອກໃນແຕ່ລະໄລຍະ, ສະມາຊິກພັກເຖິງວ່າຈະຢູ່ໃນຖານະຕຳແໜ່ງໃດກໍຕາມ ຕ້ອງເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ.

**7. <u>ເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍ</u>.**

- ປະກົດການຫຍໍ້ທໍ້ຢູ່ໃນສັງຄົມ ກໍຄື ຢູ່ໃນກົງຈັກການຈັດຕັ້ງຂອງພັກ, ຂອງລັດເຮົາລ້ວນແຕ່ສິ່ງຜົນກະທົບທາງລົບຕໍ່ບົດບາດການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ. ສະນັ້ນ, ສະມາຊິກພັກຕ້ອງເປັນຜູ້ນຳໜ້າໃນການແກ້ໄຂ ໂດຍເລີ່ມຈາກການສຳຫຼວດກວດກາຕົນເອງຫາກມີສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມຕື່ນຕົວແກ້ໄຂບັນຫາຢ່າງເດັດຂາດ ພ້ອມກັນນັ້ນ ຕ້ອງເອົາໃຈໃສ່ຕິດຕາມກວດກາຂົງເຂດຄວາມຮັບຜິດຊອບຂອງຕົນເປັນປະຈຳ, ຫາກເຫັນສິ່ງຫຍໍ້ທໍ້ເກີດຂຶ້ນ ຕ້ອງມີຄວາມເຂັ້ມງວດໃນການແກ້ໄຂ, ຫຼີກເວັ້ນການປົກປ້ອງ ຫຼື ປົກປິດສິ່ງຫຍໍ້ທໍ້ນັ້ນ.

# ບົດທີ 5
# ແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ

## I. ຄວາມສຳນຶກ, ຄວາມຈຳເປັນຂອງການແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

### 1. ຄວາມສຳນຶກກ່ຽວກັບພະຍາດອາດຍາສິດ.

ພະຍາດອາດຍາສິດ ແມ່ນການປະພຶດທີ່ສະແດງອອກໂດຍການເມີນເສີຍຂອງພະນັກງານ, ສະມາຊິກພັກ ຫ່າງເຫີນຈາກຕົວຈິງ, ຫ່າງເຫີນຈາກມະຫາຊົນ, ແນວຄິດພາກສ່ວນ, ກຸ່ມກ້ອນ, ເສລີບໍ່ມີລະບຽບວິໄນ, ບໍ່ປະຕິບັດຄຳສັ່ງ, ຂໍ້ກຳນົດກົດໝາຍ, ສວຍໃຊ້ວິຊາສະເພາະເພື່ອຫາຜົນປະໂຫຍດ, ເພື່ອຂັດຂວາງຕໍ່ຕ້ານບໍ່ປະຕິບັດຕາມຂໍ້ຕົກລົງຂອງຂັ້ນເທິງ, ສວຍໃຊ້ຖານະຕຳແໜ່ງ ໂດຍສະເພາະ ໃນຂົງເຂດເສດຖະກິດ; ພົວພັນນຳແຕ່ເອກະຊົນຜູ້ລ້ຳລວຍ, ສ້າງເງື່ອນໄຂຕ່າງໆ ອຳນວຍຄວາມສະດວກເພື່ອກອບໂກຍຜົນປະໂຫຍດ ໂດຍບໍ່ມີຫຼັກການໃຫ້ແກ່ໝູ່ເພື່ອນ, ຍາດພີ່ນ້ອງຂອງຕົນ ເພື່ອຜົນຕອບແທນ, ບໍ່ສົນໃຈນຳຜູ້ທຸກຍາກ, ນຳພະນັກງານ, ລັດຖະກອນທີ່ມີຄວາມຫຍຸ້ງຍາກ ແລະ ເບິ່ງເບົາພາກສ່ວນເສດຖະກິດຂອງລັດ.

### 2. ຄວາມສຳນຶກກ່ຽວກັບການສໍ້ລາດບັງຫຼວງ.

ການສໍ້ລາດບັງຫຼວງ ແມ່ນພຶດຕິກຳຂອງພະນັກງານທີ່ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນ ເພື່ອຍັກຍອກ, ສໍ້

ໂກງ, ຮັບສິນບົນ ແລະ ພຶດຕິກຳອື່ນໆ ເພື່ອຫາຜົນປະໂຫຍດໃຫ້ຕົນເອງ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດຂອງພົນລະເມືອງ. ການສໍ້ລາດບັງຫຼວງ ແມ່ນພຶດຕິກຳທີ່ໜ້າລັງກຽດທີ່ສຸດ, ບຸກຄົນໃດຫາກໄດ້ທຳການສໍ້ລາດບັງຫຼວງ ຖືວ່າບຸກຄົນນັ້ນໜ້າລັງກຽດທີ່ສຸດໃນສັງຄົມ.

**3. <u>ຄວາມຈຳເປັນຂອງການແກ້ໄຂພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ</u>.**

ພາຍໃຕ້ການນຳພາຂອງພັກ ປະເທດຊາດມີສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຖານະບົດບາດຂອງປະເທດເຮົານັບມື້ສູງເດັ່ນໃນເວທີພາກພື້ນ ແລະ ສາກົນ. ແຕ່ພ້ອມກັນນັ້ນ ກໍປະເຊີນກັບສິ່ງທ້າທາຍທົດສອບຫຼາຍປະການ ເຊັ່ນ: ຄວາມອ່ອນແອໃນການປະຕິບັດວິໄນແຜນການ-ການເງິນ, ບັນຫາໜີ້ສິນຂອງລັດໜັກໜ່ວງ, ການສ້າງພັກ, ພະນັກງານບໍ່ຕິດພັນກັບໜ້າທີ່ການເມືອງຕົວຈິງ ທັງຍັງມີການລະເມີດບັນດາຫຼັກການພື້ນຖານຂອງພັກ ທັງໝົດນັ້ນ ລ້ວນແຕ່ມີການພົວພັນໂດຍກົງກັບພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ ທີ່ນັບມື້ນັບຫຼາຍຂຶ້ນ. ປັດຈຸບັນພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ ຖືເປັນປະກົດການຫຍໍ້ທໍ້ອັນໜຶ່ງທີ່ເປັນໄພອັນຕະລາຍຮ້າຍແຮງຕໍ່ການພັດທະນາເສດຖະກິດ-ສັງຄົມ, ເປັນໄພຂົ່ມຂູ່ຕໍ່ສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງຊາດ, ເປັນ

ບັນຫາທີ່ບັນທອນກຳລັງແຮງຂອງບັນດາສະຖາບັນ, ຄ່ານິຍົມຂອງຄວາມເປັນປະຊາທິປະໄຕ, ຄວາມເຊື່ອຖືໃນຈັນຍາທຳ ແລະ ຄວາມຍຸຕິທຳໃນສັງຄົມ ທັງເປັນບັນຫາໜຶ່ງທີ່ກະທົບເຖິງບົດບາດການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ລະບົບການເມືອງ, ທຳລາຍຂໍ້ກຳນົດຄຸນສົມບັດສັງຄົມ ແລະ ຄວາມສັກສິດແຫ່ງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍຫຼຸດລົງ.

ພັກ-ລັດເຮົາ ຍາມໃດກໍຖືສຳຄັນ ແລະ ຊີ້ໃຫ້ເຫັນເຖິງໄພອັນຕະລາຍຂອງພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ ທັງເອົາໃຈໃສ່ນຳພາສະກັດກັ້ນແກ້ໄຂບັນຫາດັ່ງກ່າວຕະຫຼອດມາ; ໄດ້ນຳພາສຶກສາອົບຮົມໃຫ້ພະນັກງານ, ສະມາຊິກພັກ ຮັບຮູ້, ເຂົ້າໃຈ ແລະ ປຸກລະດົມເຂົ້າຮ່ວມການຕ້ານ, ສະກັດກັ້ນພະຍາດອາດຍາສິດ ກໍຄື ການສໍ້ລາດບັງຫຼວງ. ແຕ່ຄວາມຮັບຮູ້, ເຂົ້າໃຈຕໍ່ຜົນຮ້າຍ ແລະ ຄວາມອັນຕະລາຍຂອງພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງບໍ່ທັນເລິກເຊິ່ງເຖິງຖອງ, ຕົວຈິງຍັງມີປະກົດການຖືເບົາການແກ້ໄຂ ຫຼື ແກ້ໄຂບັນຫາບໍ່ຕິດພັນກັບຕົວຈິງ, ບໍ່ມີຈຸດສຸມ, ບໍ່ອີງໃສ່ກຳລັງແຮງປະຊາຊົນ, ຫຼາຍບ່ອນລະເມີດຫຼັກການຂອງພັກ ແລະ ກົດໝາຍຂອງລັດ.

ພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ ໃນແບບແຜນການນຳພາ, ຄຸ້ມຄອງທີ່ນັບມື້ນັບຮ້າຍແຮງ ໃນປັດຈຸບັນພວມເປັນບັນຫາທີ່ທົ່ວສັງຄົມໃຫ້ຄວາມສົນໃຈຫຼາຍ ທັງກຳລັງສ້າງຜົນກະທົບຕໍ່ບົດບາດ ແລະ ຄວາມສາມາດໃນການນຳພາຂອງພັກ ກໍຄືຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ລະບອບໃໝ່, ເປັນອຸປະສັກກີດ

ໜ່ວງການພັດທະນາ, ເປັນຊ່ອງວ່າງທີ່ອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີສວຍໃຊ້ເພື່ອທັບຖົມໂຈມຕີການນຳຂອງພັກ ແລະ ລະບອບການເມືອງຂອງພວກເຮົາ. ດັ່ງນັ້ນ, ການແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແມ່ນຄວາມຈຳເປັນພາວະວິໄສ, ເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງພັກ-ລັດ; ຄະນະພັກ, ພະນັກງານການນຳທຸກຂັ້ນ ແລະ ທຸກພາກສ່ວນ ຕ້ອງເປັນເຈົ້າການຈັດຕັ້ງນຳພາແກ້ໄຂພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງຢ່າງຕັ້ງໜ້າ ແລະ ເປັນເຈົ້າການສູງ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ກຳນົດວ່າ: **"ຖືສຳຄັນ ແລະ ບູລິມະສິດຕໍ່ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນກົງຈັກການຈັດຕັ້ງ ແລະ ໃນຖັນແຖວພະນັກງານ, ສະມາຊິກພັກ; ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງທີ່ເກີດໃນກົງຈັກການຈັດຕັ້ງ, ຖືເອົາການສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງ ເປັນຄວາມຮັບຜິດຊອບຂອງພັກ, ຂອງທຸກການຈັດຕັ້ງ"**. ສະນັ້ນ, ຄະນະພັກ, ພະນັກງານການນຳຢູ່ແຕ່ລະຂັ້ນຕ້ອງເປັນແບບຢ່າງໃນການແກ້ໄຂພະຍາດອາດຍາສິດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ມີແບບແຜນການດຳລົງຊີວິດທີ່ຖືກຕ້ອງ, ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງ; ເປັນແບບຢ່າງໃນການປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ; ຕ້ອງຖືເອົາການຕິດຕາມ, ກວດກາປົກກະຕິ, ກວດກາແຕ່ຫົວທີເປັນວິທີການຕົ້ນຕໍ, ເອົາການກວດກາຕາມຄຳສັ່ງ, ຕາມຄຳຮ້ອງຄຳສະເໜີ ແລະ ຕາມຜົນການກວດສອບເປັນອັນຈຳເປັນ. ກ່ຽວກັບບັນ

ຫາການສໍ້ລາດບັງຫຼວງນັ້ນ ຕ້ອງຖືເອົາການສຶກສາອົບຮົມເພື່ອສະກັດກັ້ນເປັນຕົ້ນຕໍ, ເອົາການກວດກາ, ແກ້ໄຂເປັນມາດຕະການທີ່ຈຳເປັນຕ້ອງປະຕິບັດ.

**II. <u>ເນື້ອໃນຂອງພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ</u>.**

**1. <u>ເນື້ອໃນພະຍາດອາດຍາສິດ</u>.**

1. ພະຍາດອາດຍາສິດ ແມ່ນການຫ່າງເຫີນຈາກປະຊາຊົນ, ຖືໂຕເປັນອາດຍາເຈົ້ານາຍຜູ້ມີສິດອຳນາດ ແລ້ວເຮັດຕາມໃຈຕົນເອງໂດຍບໍ່ຄຳນຶງເຖິງກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ, ບໍ່ຟັງຄຳຄິດ ຄຳເຫັນມະຫາຊົນ, ຍິ່ງໄປກວ່ານັ້ນ ແມ່ນໝິ່ນປະໝາດຄວາມເຫັນຂອງຜູ້ອື່ນ ແລະ ບໍ່ຢຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ເຮັດວຽກໃຊ້ແຕ່ຄຳສັ່ງ, ຟັງແຕ່ການລາຍງານ ແຕ່ບໍ່ລົງຕິດຕາມຕົວຈິງ.

2. ພະຍາດອາດຍາສິດ ແມ່ນພະຍາດທີ່ບໍ່ແທດເຖິງວຽກງານຕົວຈິງ, ບໍ່ເອົາໃຈໃສ່ຕິດຕາມ ແລະ ສຶກສາອົບຮົມພະນັກງານ, ບໍ່ໃກ້ຊິດຕິດແທດກັບມະຫາຊົນ, ເຮັດວຽກແບບຜິວເຜີນ, ມັກອວດອົ່ງທະນົງຕົວ, ມັກຄວາມສະໜຸກສະໜານ, ບໍ່ສັງເກດຕີລາຄາທຸກບ່ອນທຸກທີ່, ບໍ່ລົງເລິກບັນຫາ, ມີແຕ່ຮູ້ເປີດກອງປະຊຸມ, ຂຽນຄຳສັ່ງ, ອ່ານລາຍງານຕາມເຈ້ຍ ແລະ ບໍ່ມີການກວດກາ.

3. ເກີດມີແນວຄິດຄອນແຄນ ບໍ່ໜັກແໜ້ນ, ຂາດຄວາມເຊື່ອໝັ້ນຕໍ່ອຸດົມການປະຕິວັດ, ພະນັກງານຈຳນວນໜຶ່ງຫ່າງເຫີນຈາກມະຫາຊົນ, ຫ່າງເຫີນຈາກອຸດົມການສັງຄົມນິຍົມຂອງພັກ ສວຍ

ໃຊ້ອຳນາດລັດ ແລະ ລວມໝູ່ ແລ່ນນຳຜົນປະໂຫຍດສ່ວນຕົວເປັນໃຫຍ່, ຊອກຫາທຸກວິທີທາງ ເພື່ອເປັນຊ່ອງຫວ່າງເພື່ອສໍ້ລາດບັງຫຼວງ, ຍັກຍອກສໍ້ໂກງ; ຮັບເອົາຄ່າຈ້າງສິນບົນ ຫຼື ລະເມີດລະບຽບການ, ຂໍ້ກຳນົດກົດໝາຍໂດຍເຈດຕະນາ ເພື່ອສ້າງຄວາມຮັ່ງມີໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ, ໝູ່ເພື່ອນ ແລະ ອື່ນໆ.

4. ພະຍາດອາດຍາສິດ ແລະ ການສໍ້ລາດບັງຫຼວງ ຂອງພະນັກງານຍັງເຫັນຢູ່ຫຼາຍຂັ້ນ, ຍັງມີລັກສະນະແຜ່ລາມທົ່ວໄປ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເດັດຂາດເຂັ້ມງວດ, ສິ່ງເຫຼົ່ານີ້ພວມເປັນບັນຫາທ້າທາຍຕໍ່ບົດບາດອິດທິພົນ ກໍຄືຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແລະ ກະທົບໂດຍກົງໃສ່ຄວາມເຊື່ອໝັ້ນ ແລະ ສັດທາຂອງປະຊາຊົນຕໍ່ພັກ.

ເວົ້າລວມແລ້ວ, ບັນດາຜູ້ຕິດພະຍາດອາດຍາສິດ ຫຼື ບຸກຄົນອາດຍາສິດ ແມ່ນເບິ່ງບັນຫາບໍ່ເລິກ, ຟັງບໍ່ໄດ້ຍິນ ແລະ ບໍ່ເຂົ້າໃຈຫຍັງໝົດ, ມີລະບອບມະຕິ, ຄຳສັ່ງ ກໍບໍ່ປະຕິບັດໃຫ້ຖືກຕ້ອງ, ມີລະບຽບວິໄນ ແຕ່ບໍ່ຮັກສາຢ່າງເຂັ້ມງວດ, ໃນທີ່ສຸດກໍເຮັດໃຫ້ຄົນບໍ່ດີ, ພະນັກງານ, ສະມາຊິກພັກຈຳນວນໜຶ່ງເສື່ອມເສຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ; ໂລບມາກໂລພາ, ຫຼິ້ນກິນຟຸມເຟືອຍ, ສໍ້ລາດບັງຫຼວງຜ່ານມາພະຍາດອາດຍາສິດມັນເຊື່ອງຊ້ອນ, ແອບແຝງ ແລະ ເຄື່ອນໄຫວຢູ່ພາຍໃນບັນດາກະຊວງ-ອົງການຂອງພັກ-ລັດພວກເຮົາມາໂດຍຕະຫຼອດ. ຍ້ອນແນວນັ້ນ ພະຍາດອາດຍາສິດຈຶ່ງແມ່ນສັດຕູຕົວອັນຕະລາຍທີ່ສຸດ ເພາະພະຍາດອາດຍາສິດມັນໄດ້ທຳລາຍຈິດໃຈ, ຟຸມເຟືອຍກຳລັງເຫື່ອແຮງ, ຕັດຮອນກິນ

ຊັບສິນເງິນ-ຄຳຂອງລັດ ແລະ ຂອງປະຊາຊົນ, ການກະທຳສິ່ງດັ່ງກ່າວນີ້ມັນໜັກໜ່ວງທີ່ສຸດ ບໍ່ຕ່າງຫຍັງກັບພວກຂາຍຊາດ, ພວກນັກສືບສອດແນມ.

**2. <u>ເນື້ອໃນການສໍ້ລາດບັງຫຼວງ</u>.**

ການສໍ້ລາດບັງຫຼວງ ສະແດງອອກຫຼາຍລັກສະນະ, ຫຼາຍຮູບແບບ, ຫຼາຍລະດັບທີ່ສັບສົນ ແລະ ມີລັກສະນະແຜ່ຫຼາຍທົ່ວໄປ ຊຶ່ງສະແດງອອກດັ່ງນີ້:

1. ການຄ້າຂາຍເຖື່ອນ, ການລັກລອບໜີພາສີ, ບໍ່ເສຍພັນທະໃຫ້ລັດ. ໃນກໍລະນີດັ່ງກ່າວສ່ວນຫຼາຍແມ່ນເກີດຈາກພະນັກງານ, ສະມາຊິກພັກຈຳນວນໜຶ່ງ ສົມຮູ້ຮ່ວມຄິດກັບຜູ້ປະກອບການທຸລະກິດດ້ານຕ່າງໆ.

2. ເຈົ້າໜ້າທີ່ຂອງລັດ ຍັກຍອກເອົາເງິນນຳພົນລະເມືອງ ທີ່ມາປະກອບເອກະສານ, ມາຮ້ອງຂໍ ຫຼື ມາສະເໜີໃຫ້ຊ່ວຍແກ້ໄຂບັນຫາໃດໜຶ່ງທີ່ຜູ້ກ່ຽວ ຫຼື ຍາດພີ່ນ້ອງ... ໄດ້ກະທຳສິ່ງທີ່ຜິດຕໍ່ລະບຽບ ແລະ ກົດໝາຍຂອງລັດ, ການເກັບເງິນຄ່າບໍລິການຕ່າງໆ (ຄ່າທຳນຽມ) ໂດຍບໍ່ຖືກຕ້ອງຕາມຫຼັກການ, ການຮັບເງິນຊື້ຈ້າງນຳຜູ້ທີ່ກະທຳຜິດ ແລ້ວປີ້ນຄະດີຈາກຜິດມາເປັນຖືກ ແລະ ອື່ນໆ.

3. ການກິນສິນບົນນຳບໍລິສັດ, ພໍ່ຄ້າຊາວຂາຍ, ຈາກການປະມູນກິດຈະການກໍ່ສ້າງ, ຈາກການອຳນວຍຄວາມສະດວກໃຫ້ພວກນັກທຸລະກິດ, ນາຍທຶນ ແລະ ພວກຄົນບໍ່ດີ ເຄື່ອນໄຫວຊື້-ຂາຍຜິດຕໍ່ລະບຽບຫຼັກການ ແລະ ກົດໝາຍຂອງລັດ.

4. ການຕົວະຕົ້ມລັດ, ລວມໝູ່ ແລະ ປະຊາຊົນດ້ວຍການໃຊ້

ເຕັກນິກວິຊາການ, ວິທີການຄິດໄລ່ ແລະ ການປອມແປງຕ່າງໆ ເຊັ່ນ: ຄິດໄລ່ກິດຈະການກໍ່ສ້າງແຕ່ບໍ່ເຮັດຕາມມາດຖານເຕັກນິກ, ປອມແປງເອກະສານ, ແຈ້ງລາຄາຂີ້ຕົວະ, ເອົາທຶນຂອງລັດໄປໝູນທາງອື່ນ ເພື່ອຜົນປະໂຫຍດສ່ວນຕົວ ແລະ ອື່ນໆ.

5. ສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງເກີນຂອບເຂດເພື່ອຫາຜົນປະໂຫຍດສ່ວນຕົວໂດຍບໍ່ຖືກຕ້ອງຕາມກົດໝາຍ, ຂາດການ, ມາການແຕ່ບໍ່ເຮັດວຽກ ຫຼື ເຮັດກໍເຮັດແບບແປະໆບາງໆ, ເຂົ້າການຊ້າເລີກໄວ ຫຼື ຍິ່ງໄປກວ່ານັ້ນແມ່ນເອົາວຽກອື່ນມາເຮັດຢູ່ຫ້ອງການ...

**ລວມຄວາມວ່າ:** ການສໍ້ລາດບັງຫຼວງ ແມ່ນການກະທຳຜິດທີ່ເປັນໄພອັນຕະລາຍຕໍ່ສັງຄົມ, ເຮັດໃຫ້ຊັບສິນເງິນຄຳຂອງລັດສູນເສຍ, ພະນັກງານເສື່ອມທາດຂາດຄຸນ, ປະຊາຊົນລະແວງສົງໄສຕໍ່ພັກ ແລະ ລັດຖະບານ, ເປັນຊ່ອງຫວ່າງໃຫ້ພວກອິດທິກຳລັງປໍລະປັກສວຍໃຊ້ເພື່ອມ້າງເພທຳລາຍ ລະບອບໃໝ່ຂອງພວກເຮົາ. ໃນທີ່ສຸດກໍຈະເຮັດໃຫ້ລະບອບການເມືອງຂອງພວກເຮົາຖືກກະທົບກະເທືອນ ແລະ ປະເທດຊາດກໍຈະຖືກລົ້ມຈົມ.

ໃນບົດໂອ້ລົມຕໍ່ກອງປະຊຸມວຽກງານກວດກາທົ່ວປະເທດຄັ້ງທີ III ທ່ານ ບຸນຍັງ ວໍລະຈິດ ປະທານປະເທດແຫ່ງ ສປປ ລາວ ໄດ້ຍໍ້າຕື່ມວ່າ "ປັດຈຸບັນ ແລະ ຊຸມປີຕໍ່ໜ້າພວກເຮົາປະເຊີນກັບໄພອັນຕະລາຍ 6 ຢ່າງຄື: ຄວາມທຸກຍາກຂອງປະຊາຊົນ ແລະ ຄວາມຫຼຸດໂຕນກັນໃນສັງຄົມ, ການເສື່ອມຖອຍຄຸນທາດການເມືອງ ຂອງພະນັກງານ, ສະມາຊິກພັກ, ບັນຫາໜີ້ສິນໜັກໜ່ວງ, ບັນຫາຫຍໍ້ທໍ້ທາງສັງຄົມ, ໄພສໍ້ລາດບັງຫຼວງ ແລະ ກິນອຸບາຍຫັນປ່ຽນໂດຍສັນ

ຕິຂອງອິດທິກຳລັງປໍລະປັກຕໍ່ພາຍໃນພັກພວກເຮົາ. ໃນບັນດາໄພອັນຕະລາຍດັ່ງກ່າວ, ການສໍ້ລາດບັງຫຼວງພວມກາຍເປັນບັນຫາຟົດເດືອດທີ່ສຸດໃນສັງຄົມ ແລະ ຕົວຈິງກໍສົ່ງຜົນກະທົບໜັກໜ່ວງຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍຄືບົດບາດການນຳພາຂອງພັກ ແລະຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ ຂອງພວກເຮົາ”.

## III. <u>ທັດສະນະຂອງພັກ, ຫຼັກການ, ມາດຕະການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ</u>.

### 1. <u>ທັດສະນະຂອງພັກ ກ່ຽວກັບການສະກັດກັ້ນ ແລະຕ້ານການສໍ້ລາດບັງຫຼວງ</u>.

① ພັກ-ລັດ ຍາມໃດກໍຖືເອົາການຕ້ານການສໍ້ລາດບັງຫຼວງເປັນໜ້າທີ່ສຳຄັນ, ຮີບດ່ວນ ແລະ ຍາວນານຕະຫຼອດໄລຍະແຫ່ງການພັດທະນາເສດຖະກິດ-ສັງຄົມ ແລະ ການກໍ່ສ້າງລັດປົກຄອງດ້ວຍກົດໝາຍ.

② ການຕ້ານການສໍ້ລາດບັງຫຼວງ ເປັນໜ້າທີ່ລວມຂອງສາກົນ ແລະ ພາກພື້ນ ທັງເປັນປັດໄຈທີ່ສຳຄັນ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ, ປະຊາຊົນມີຄວາມເຊື່ອໝັ້ນຕໍ່ພັກ-ລັດ ແລະ ຕໍ່ລະບອບປະຊາທິປະໄຕປະຊາຊົນ.

③ ການຕ້ານການສໍ້ລາດບັງຫຼວງ ແມ່ນຄວາມຮັບຜິດຊອບຂອງການຈັດຕັ້ງທຸກຂັ້ນ ໃນລະບົບການເມືອງ, ການຈັດຕັ້ງສັງຄົມ, ການຈັດຕັ້ງຂອງບັນດາວິສາຫະກິດ, ຜູ້ປະກອບການ ແລະ ພົນລະ

ເມືອງ ພາຍໃຕ້ການນຳພາຂອງພັກ, ເປັນຄວາມຮັບຜິດຊອບໂດຍກົງຂອງການນຳທຸກຂັ້ນ ໂດຍສະເພາະແມ່ນຜູ້ເປັນຫົວໜ້າຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມອື່ນໆ.

④ ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ມີເຄືອຂ່າຍການຈັດຕັ້ງ ແລະ ມີສົນທິສັນຍາສາກົນທີ່ເປັນຫຼັກ ສຳລັບການພົວພັນຮ່ວມມືໃນພາກພື້ນ ແລະ ສາກົນ. ສະນັ້ນ, ຕ້ອງເພີ່ມທະວີການພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນເພື່ອຊອກຮູ້ບົດຮຽນ ແລະ ຍາດແຍ່ງການສະໜັບສະໜູນຈາກພາກພື້ນ ແລະ ສາກົນ ໃນວຽກງານການຕ້ານການສໍ້ລາດບັງຫຼວງ.

## 2. ຫຼັກການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

① ຖືເອົາການສະກັດກັ້ນເປັນຕົ້ນຕໍ ແລະ ເອົາການຕ້ານການສໍ້ລາດບັງຫຼວງເປັນອັນຈຳເປັນ ຕ້ອງໄດ້ປະຕິບັດ.

② ດຳເນີນການກວດກາ ສືບສວນ-ສອບສວນ ຕໍ່ທຸກປະກົດການສໍ້ລາດບັງຫຼວງຢ່າງທັນການ, ເຂັ້ມງວດ, ເປັນເອກະລາດ, ພາວະວິໄສ, ຊັດເຈນ ແລະ ເປີດເຜີຍ.

③ ແກ້ໄຂຢ່າງທັນການ, ເຂັ້ມງວດ ແລະ ຍຸຕິທຳ ໃນກໍລະນີທີ່ມີການກະທຳຜິດ.

④ ຮັບປະກັນບໍ່ໃຫ້ມີການແຊກແຊງ, ຂັດຂວາງ ຫຼື ນາບຂູ່ຈາກບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

⑤ ຕ້ອງໃຫ້ການຮ່ວມມື, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຕິດຕາມກວດກາ.

**3. ມາດຕະການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.**

① ສຶກສາອົບຮົມຄຸນທາດການເມືອງ, ຄຸນສົມບັດສິນທຳ ປະຕິວັດ ແລະ ຄວາມເປັນແບບຢ່າງນຳໜ້າຂອງພະນັກງານ, ສະມາຊິກພັກ ເປັນຕົ້ນແມ່ນພະນັກງານການນຳທຸກຂັ້ນ ຕ້ອງມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ຂໍ້ຫ້າມສະມາຊິກພັກ ແລະ ກົດໝາຍຂອງລັດຢ່າງເຂັ້ມງວດ, ດຳລົງຊີວິດຢ່າງປອດໃສ.

② ປັບປຸງກົນໄກການບໍລິຫານ, ການຄຸ້ມຄອງໃຫ້ເປັນລະບົບຄົບຊຸດ, ມີປະສິດທິຜົນ ແລະ ໂປ່ງໃສ; ພ້ອມກັນນັ້ນ ການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ ແລະ ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມທຸກຂັ້ນ ລວມທັງວິສາຫະກິດ ແລະ ເອກະຊົນຕ້ອງປັບປຸງພາລະບົດບາດ, ສິດ, ໜ້າທີ່ ແລະ ພັນທະຢ່າງຄົບຖ້ວນ ແລະ ດຳເນີນການສຳຫຼວດກວດກາ, ຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ ເພື່ອສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ເຂັ້ມງວດ ແລະ ທັນການ.

③ ປຸກລະດົມທຸກກຳລັງເຂົ້າຮ່ວມຂະບວນການຕ້ານການສໍ້ລາດບັງຫຼວງ ຢ່າງແຂງແຮງ, ເອົາໃຈໃສ່ປະຕິບັດກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງຢ່າງເຂັ້ມງວດ; ບັນດາອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ສະຖານທູດ, ສະຖານກົງສູນ, ສື່ມວນຊົນ ແລະ ພົນລະເມືອງລາວທຸກຄົນຕ້ອງປະກອບສ່ວນເຂົ້າໃນການເຄື່ອນໄຫວສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງດ້ວຍການຮ່ວມມື, ອຳນວຍຄວາມສະດວກ, ສະໜອງຂໍ້ມູນ, ຫຼັກຖານ

ໃຫ້ແກ່ອົງການທີ່ມີສິດ ແລະ ກ່ຽວຂ້ອງຢ່າງທັນການ.

④ ພະນັກງານທີ່ດຳເນີນວຽກງານຕ້ານການສໍ້ລາດບັງຫຼວງ ລວມທັງຜູ້ທີ່ເຂົ້າຮ່ວມໃນວຽກງານດັ່ງກ່າວ ເຊັ່ນ: ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນຂ່າວສານ, ຜູ້ເສຍຫາຍ, ພະຍານ, ຜູ້ຊ່ຽວຊານ, ຄອບຄົວຂອງຜູ້ກ່ຽວຕ້ອງໄດ້ຮັບການປົກປ້ອງຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະຫຼະພາບ, ກຽດສັກສີ, ຊື່ສຽງ, ຊັບສິນ ແລະ ກໍລະນີອື່ນໆ.

⑤ ບັນດາອົງການຍຸຕິທຳ ຕ້ອງມີຄວາມເຂັ້ມແຂງ, ເດັດຂາດ, ຕັດສິນດ້ວຍຄວາມຍຸຕິທຳ ໂດຍບໍ່ໄດ້ປະຕິບັດການຕັດສິນໃຫ້ການຮັບໂທດນັ້ນດ້ວຍການຊື້ນຳ ຫຼື ມີການຊັກໄຍຢູ່ເບື້ອງຫຼັງ, ໂທດແນວໃດກໍຕ້ອງໄດ້ຮັບແນວນັ້ນ, ພ້ອມກັນນັ້ນ ກໍຕ້ອງປະກາດໂທດນັ້ນໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ; ປັບປຸງກົນໄກການຕິດຕາມກວດກາ, ການກວດສອບ, ການສືບສວນ-ສອບສວນ, ການດຳເນີນຄະດີ, ການຕັດສິນຄະດີ ແລະ ການປະຕິບັດຄຳຕັດສິນຂອງສານກ່ຽວກັບການສໍ້ລາດບັງຫຼວງ ຢ່າງເປີດເຜີຍ, ມີຄວາມຍຸຕິທຳ ແລະ ທັນເວລາ.